ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0166/ອຄ

ນະຄອນຫຼວງວຽງຈັນ, ວັນທີ 09 FEB 2023

# ຂໍ້ຕົກລົງ
# ວ່າດ້ວຍໂຮງງານ

- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 0050/ກອຫ.ຄຣ, ລົງວັນທີ 06 ມັງກອນ 2023.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ເພື່ອໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໂຮງງານ ແນໃສ່ຮັບປະກັນໃຫ້ການຜະລິດໄດ້ມາດຕະຖານ, ຜະລິດຕະພັນມີຄຸນນະພາບ, ຮັບປະກັນຄວາມປອດໄພ ແລະ ສຸຂານາໄມ ຂອງຜູ້ອອກແຮງງານ ແລະ ປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດທັນເປັນອຸດສາຫະກຳທັນສະໄໝ, ສີຂຽວ ແລະ ຍືນຍົງ.

### ມາດຕາ 2 ໂຮງງານ

ໂຮງງານ ແມ່ນ ອາຄານ ຫຼື ສະຖານທີ່ ເພື່ອດຳເນີນກິດຈະກຳການ ຜະລິດ, ປຸງແຕ່ງ, ແປຮູບ ວັດຖຸດິບ ຫຼື ວັດຖຸດິບເຄິ່ງສຳເລັດຮູບ ຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ເປັນສິນຄ້າ ດ້ວຍການນຳໃຊ້ເຄື່ອງຈັກ ຫຼື ແຮງງານຄົນ ໂດຍຜ່ານຂະບວນການ ຜະລິດ, ປະກອບ, ສ້ອມແປງ, ຟື້ນຟູ, ປັບປຸງ, ດັດແປງ, ບັນຈຸ, ຄັດແຍກ ຫຼື ປຸງແຕ່ງຄືນໃໝ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຄຸ້ມຄອງໂຮງງານ** ໝາຍເຖິງ ຂະບວນການອະນຸຍາດການສ້າງຕັ້ງ, ການດຳເນີນກິດຈະການ, ການຢຸດເຊົາກິດຈະການ ແລະ ການຕິດຕາມກວດກາມາດຕະຖານເຕັກນິກໂຮງງານ;

2. **ການກໍ່ສ້າງໂຮງງານ** ໝາຍເຖິງ ການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບຄວາມປອດໄພ, ສຸຂານາໄມໂຮງງານ ແລະ ລະບົບປ້ອງກັນສິ່ງແວດລ້ອມໂຮງງານ;

3. **ອາຄານໂຮງງານ** ໝາຍເຖິງ ອາຄານສຳລັບການຜະລິດ, ສາງເກັບມ້ຽນວັດຖຸດິບ ແລະ ຜະລິດຕະພັນ, ອາຄານຫ້ອງການບໍລິຫານ ແລະ ອາຄານອື່ນ ຕາມຄວາມຈຳເປັນຂອງແຕ່ລະໂຮງງານ;

4. **ໃບອະນຸຍາດສ້າງຕັ້ງໂຮງງານ** ໝາຍເຖິງ ເອກະສານການອະນຸຍາດໃຫ້ລົງທຶນ ແລະ ຢັ້ງຢືນດ້ານທີ່ຕັ້ງໂຮງງານ ສຳລັບກິດຈະການອຸດສາຫະກຳປຸງແຕ່ງ ທີ່ຕ້ອງຂໍອະນຸຍາດສ້າງຕັ້ງ;

5. **ໃບຢັ້ງຢືນດຳເນີນກິດຈະການໂຮງງານ** ໝາຍເຖິງ ໃບຢັ້ງຢືນດ້ານມາດຕະຖານເຕັກນິກຂອງໂຮງງານເພື່ອອະນຸຍາດໃຫ້ດຳເນີນການຜະລິດ ພາຍຫຼັງທີ່ໄດ້ສຳເລັດການກໍ່ສ້າງໂຮງງານ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງແລ້ວ;

6. **ແບບພິມ ຮງ** ໝາຍເຖິງ ເອກະສານກຳນົດຮູບແບບການປະກອບຂໍ້ມູນ ເພື່ອພິຈາລະນາອອກໃບອະ ນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ການຢຸດເຊົາດຳເນີນກິດຈະການໂຮງງານ ປະກອບດ້ວຍ ແບບພິມ ຮງ 1 ໃບຄຳຮ້ອງຂໍສ້າງຕັ້ງ ແລະ ຂະຫຍາຍໂຮງງານ, ຮງ 2 ໃບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ແລະ ຕໍ່ອາຍຸດຳເນີນກິດຈະການໂຮງງານ, ຮງ 3 ໃບຄຳຮ້ອງຂໍຢຸດເຊົາການດຳເນີນກິດຈະການໂຮງງານ, ຮງ 4 ໃບສະເໜີຂໍກວດກາທີ່ຕັ້ງໂຮງງານ, ຮງ 5 ໃບແຈ້ງການຜະລິດທົດລອງ, ຮງ 6 ໃບສະເໜີຂໍຍົກຍ້າຍເຄື່ອງຈັກ, ຮງ 7 ໃບອະນຸຍາດສ້າງຕັ້ງໂຮງງານ, ຮງ 8 ໃບຢັ້ງຢືນດຳເນີນກິດຈະການໂຮງງານ, ຮງ 9 ໃບຢັ້ງຢືນການຢຸດເຊົາດຳເນີນກິດຈະການໂຮງງານ, ຮງ 10 ໃບຢັ້ງຢືນການຍົກຍ້າຍເຄື່ອງຈັກ, ຮງ 11 ບົດບັນທຶກກວດກາການສ້າງຕັ້ງໂຮງງານ, ຮງ 12 ບົດບັນທຶກກວດກາການດຳເນີນກິດຈະການໂຮງງານ, ຮງ 13 ບົດບັນທຶກກວດກາຜົນການປັບປຸງໂຮງງານ, ຮງ 14 ບົດບັນທຶກການກວດກາໂຮງງານປົກກະຕິຕາມແຜນ, ຮງ 15 ບົດບັນທຶກການກວດກາໂຮງງານຕາມການຮ້ອງຟ້ອງ, ຮງ 16 ບົດບັນທຶກຕັກເຕືອນ, ປັບໃໝ ແລະ ຢຸດເຊົາການດຳເນີນກິດຈະການໂຮງງານ, ຮງ 17 ບົດວິພາກເສດຖະກິດ-ເຕັກນິກໂຮງງານ, ຮງ 18 ບັນຊີເຄື່ອງຈັກ ແລະ ຮງ 19 ບົດລາຍງານສະພາບການເຄື່ອນໄຫວຂອງໂຮງງານ;

7. **ແບບພິມ ຮຄ** ໝາຍເຖິງ ເອກະສານກຳນົດຮູບແບບການປະກອບຂໍ້ມູນ ເພື່ອແຈ້ງການດຳເນີນກິດ ຈະການໂຮງງານແບບຄອບຄົວ;

8. **ແບບພິມ ອ** ໝາຍເຖິງ ເອກະສານກຳນົດຮູບແບບແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານປະກອບດ້ວຍ ແບບພິມ ອ1 ແຜນການຜະລິດ, ອ2 ແຜນການຈຳໜ່າຍ, ອ3 ແຜນຄວາມຕ້ອງການວັດຖຸດິບປະຈຳປີ, ອ4 ໃບຄິດໄລ່ລາຄາສຳເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ, ອ5 ໃບຢັ້ງຢືນຜະລິດຕະພັນຂອງໂຮງງານ, ອ6 ສະຫຼຸບການນຳເຂົ້າວັດຖຸດິບ, ອຸປະກອນ, ອາໄຫຼ່, ຊິ້ນສ່ວນ, ເຄື່ອງຈັກອຸດສາຫະກຳ ແລະ ອ7 ກຳນົດໝາຍເສດຖະກິດເຕັກນິກການສິ້ນເປືອງ;

9. **ເຂດອັນຕະລາຍ** ໝາຍເຖິງ ເຂດທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຫຼື ສ້າງຄວາມເສຍຫາຍຕໍ່ຜູ້ທີ່ເຮັດວຽກຢູ່ໃນໂຮງງານ ເປັນຕົ້ນ ເຂດທີ່ຕິດຕັ້ງເຄື່ອງຈັກ, ໝໍ້ຕົ້ມນ້ຳທີ່ມີຄວາມດັນສູງ, ມີຄວາມຮ້ອນສູງ, ສຽງດັງ ຫຼື ແສງ ເກີນຄ່າມາດຕະຖານ, ເຂດເກັບຮັກສາ ແລະ ນຳໃຊ້ທາດເຄມີອັນຕະລາຍ ແລະ ອື່ນໆ;

10. **ເຂດຫວງຫ້າມ** ໝາຍເຖິງ ສະຖານທີ່ທີ່ລັດຫ້າມ ຫຼື ສະຫງວນໄວ້ ເປັນຕົ້ນ ເຂດຍຸດທະສາດ, ເຂດທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. **ຕ່ອງໂສ້ການຜະລິດ** ໝາຍເຖິງ ຂະບວນການຜະລິດທີ່ເປັນລະບົບຕໍ່ເນື່ອງ ຈາກການນຳເອົາວັດຖຸດິບເຂົ້າຜ່ານເຄື່ອງຈັກ ຫຼື ແຮງງານຄົນ ແຕ່ລະຂອດການຜະລິດ ຈົນເປັນຜະລິດຕະພັນສຸດທ້າຍຂອງໂຮງງານ.

ມາດຕາ 4 ຫຼັກການ ການຄຸ້ມຄອງໂຮງງານ

ການຄຸ້ມຄອງໂຮງງານ ໃຫ້ປະຕິບັດຕາມຫຼັກການພື້ນຕໍາ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງໂຮງງານຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ;

2. ສອດຄ່ອງກັບແນວທາງນະໂຍບາຍ ແລະ ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ໃນແຕ່ລະໄລຍະ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

3. ຮັບປະກັນການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, ການສ້າງມູນຄ່າເພີ່ມ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ;

4. ຮັບປະກັນມາດຕະຖານເຕັກນິກໂຮງງານ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມໂຮງງານ ແລະ ຄວາມເປັນລະບຽບຮຽບຮ້ອຍ;

5. ຮັບປະກັນຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ສະເໝີພາບຕໍ່ໜ້າກົດໝາຍ.

ມາດຕາ 5 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງ ລວມທັງໂຮງງານທີ່ຕັ້ງຢູ່ໃນນິຄົມອຸດສາຫະກໍາ, ເຂດເສດຖະກິດພິເສດ ແລະ ເຂດອື່ນ ຢູ່ໃນ ສປປ ລາວ.

## ພາກທີ II
## ປະເພດ ແລະ ຂະໜາດ ໂຮງງານ

ມາດຕາ 6 ປະເພດໂຮງງານ

ໂຮງງານ ແບ່ງອອກເປັນ 24 ປະເພດກິດຈະການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ດັ່ງນີ້:

1. ອຸດສາຫະກໍາ ສະບຽງອາຫານ;
2. ອຸດສາຫະກໍາ ເຄື່ອງດື່ມ;
3. ອຸດສາຫະກໍາ ຢາສູບ;
4. ອຸດສາຫະກໍາ ແຜ່ນແພ;
5. ອຸດສາຫະກໍາ ເຄື່ອງນຸ່ງຫົ່ມ;
6. ອຸດສາຫະກໍາ ໜັງ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ;
7. ອຸດສາຫະກໍາ ໄມ້, ຜະລິດຕະພັນຈາກໄມ້ ແລະ ຫວາຍ, ຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ;
8. ອຸດສາຫະກໍາ ເຈັ້ຍ ແລະ ຜະລິດຕະພັນເຈັ້ຍ;
9. ອຸດສາຫະກໍາ ກ່ຽວກັບການພິມ, ການອັດສໍາເນົາພາບ, ແສງ, ສີ, ສຽງ ທີ່ອັດບັນທຶກມາ;
10. ອຸດສາຫະກໍາ ຖ່ານຫີນ ແລະ ຜະລິດຕະພັນນໍ້າມັນ;
11. ອຸດສາຫະກໍາ ທາດເຄມີ ແລະ ຜະລິດຕະພັນເຄມີ;
12. ອຸດສາຫະກໍາ ຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນການຢາຈາກພືດ;
13. ອຸດສາຫະກໍາ ຢາງ ແລະ ປລາສະຕິກ;
14. ອຸດສາຫະກໍາ ແຮ່ທາດ ທີ່ບໍ່ແມ່ນໂລຫະ;
15. ອຸດສາຫະກໍາ ໂລຫະຂັ້ນພື້ນຖານ;
16. ອຸດສາຫະກໍາ ໂລຫະປະດິດ;
17. ອຸດສາຫະກໍາ ເຄື່ອງຄອມພິວເຕີ, ເຄື່ອງເອເລັກໂຕຣນິກ ແລະ ຜະລິດຕະພັນກ່ຽວກັບສາຍຕາ;

18. ອຸດສາຫະກຳ ອຸປະກອນໄຟຟ້າ;

19. ອຸດສາຫະກຳ ເຄື່ອງຈັກ ແລະ ເຄື່ອງປະກອບທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ;

20. ອຸດສາຫະກຳ ລົດຍົນ, ລົດພ່ວງ ແລະ ອຸປະກອນຕິດລົດພ່ວງ;

21. ອຸດສາຫະກຳ ອຸປະກອນຂົນສົ່ງອື່ນໆ ເຊັ່ນ: ເຮືອ, ກຳປັ່ນ, ເຮືອບິນ ແລະ ລົດຈັກ;

22. ອຸດສາຫະກຳ ເຄື່ອງເຟີນີເຈີ;

23. ອຸດສາຫະກຳ ອື່ນໆ ເຊັ່ນ: ການຜະລິດເຄື່ອງປະດັບເອ້ ແລະ ເຄື່ອງດົນຕີ;

24. ອຸດສາຫະກຳ ກ່ຽວກັບການສ້ອມແປງ ແລະ ຕິດຕັ້ງເຄື່ອງຈັກ ແລະ ອຸປະກອນ.

**ມາດຕາ 7 ຂະໜາດຂອງໂຮງງານ**

ໂຮງງານແບ່ງອອກເປັນ ສີ່ ຂະໜາດ ໂດຍອີງໃສ່ກຳລັງແຮງລວມຂອງເຄື່ອງຈັກ, ຈຳນວນແຮງງານ ແລະ ມູນຄ່າການລົງທຶນທັງໝົດ. ການກຳນົດຂະໜາດໂຮງງານແມ່ນ ໃຫ້ຖືເອົາຕົວເລກໃດໜຶ່ງທີ່ຫຼາຍກວ່າ ເປັນພື້ນຖານໃນການກຳນົດຂະໜາດຂອງໂຮງງານ ດັ່ງນີ້:

1. ອຸດສາຫະກຳແບບຄອບຄົວ ຫຼື ໂຮງງານແບບຄອບຄົວ ແມ່ນໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກຕ່ຳກວ່າ 10 ແຮງມ້າ ຫຼື ຈຳນວນແຮງງານຕ່ຳກວ່າ 10 ຄົນ ຫຼື ມູນຄ່າການລົງທຶນທັງໝົດຕ່ຳກວ່າ 100 ລ້ານກີບ;

2. ໂຮງງານຂະໜາດນ້ອຍ ແມ່ນໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກແຕ່ 10 ແຮງມ້າ ຫາ 50 ແຮງມ້າ ຫຼື ຈຳນວນແຮງງານແຕ່ 10 ຄົນ ຫາ 50 ຄົນ ຫຼື ມູນຄ່າການລົງທຶນທັງໝົດແຕ່ 100 ລ້ານກີບ ຫາ ໜຶ່ງຕື້ກີບ;

3. ໂຮງງານຂະໜາດກາງ ແມ່ນໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກແຕ່ 51 ແຮງມ້າ ຫາ 200 ແຮງມ້າ ຫຼື ຈຳນວນແຮງງານແຕ່ 51 ຄົນ ຫາ 200 ຄົນ ຫຼື ມູນຄ່າການລົງທຶນທັງໝົດຫຼາຍກວ່າ ໜຶ່ງຕື້ກີບ ຫາ ສີ່ຕື້ກີບ;

4. ໂຮງງານຂະໜາດໃຫຍ່ ແມ່ນໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກແຕ່ 201 ແຮງມ້າຂຶ້ນໄປ ຫຼື ຈຳນວນແຮງງານແຕ່ 201 ຄົນຂຶ້ນໄປ ຫຼື ມູນຄ່າການລົງທຶນທັງໝົດຫຼາຍກວ່າ ສີ່ຕື້ກີບຂຶ້ນໄປ.

## ພາກທີ III
## ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ
## ໝວດທີ 1
## ການສ້າງຕັ້ງໂຮງງານ

**ມາດຕາ 8 ການສ້າງຕັ້ງໂຮງງານ**

ການສ້າງຕັ້ງໂຮງງານ ໃຫ້ປະຕິບັດຂັ້ນຕອນຕາມແຕ່ລະກໍລະນີ ດັ່ງນີ້:

1. ກິດຈະການໂຮງງານ ທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ

1.1 ແຈ້ງຂຶ້ນທະບຽນວິສາຫະກິດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ;

1.2 ຂໍສ້າງຕັ້ງໂຮງງານ;

1.3 ຂໍໃບອະນຸຍາດປຸກສ້າງ;

1.4ດຳເນີນການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ລະບົບຄວາມປອດໄພ ສຸຂານາໄມ ແລະ ລະບົບການກຳຈັດ ຫຼື ບຳບັດສິ່ງເສດເຫຼືອໂຮງງານ;

1.5 ຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ.

2. ກິດຈະການໂຮງງານ ທີ່ບໍ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ

2.1 ແຈ້ງຂຶ້ນທະບຽນວິສາຫະກິດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດລົງທຶນ ຕໍ່ຂະແໜງການແຜນການ ແລະ ການລົງທຶນ ສຳລັບກິດຈະການສຳປະທານ ແລະ ກິດຈະການຄວບຄຸມ;

2.2 ສະເໜີກວດກາທີ່ຕັ້ງໂຮງງານ;

2.3 ເຮັດບົດວິພາກເສດຖະກິດ-ເຕັກນິກໂຮງງານ;

2.4 ຂໍໃບອະນຸຍາດປຸກສ້າງ;

2.5 ດຳເນີນການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ລະບົບຄວາມປອດໄພ ສຸຂານາໄມ ແລະ ລະບົບການກຳຈັດ ຫຼື ບຳບັດສິ່ງເສດເຫຼືອໂຮງງານ;

2.6 ຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ.

3. ໂຮງງານແບບຄອບຄົວ

3.1 ແຈ້ງຂຶ້ນທະບຽນວິສາຫະກິດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ;

3.2 ແຈ້ງດຳເນີນກິດຈະການໂຮງງານ ຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມທີ່ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ກິດຈະການໂຮງງານທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ**

ກິດຈະການໂຮງງານທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ແມ່ນກິດຈະການໂຮງງານ ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ທຸກປະເພດ ທີ່ນຳໃຊ້ຊັບພະຍາກອນທຳມະຊາດ, ເຄມີອັນຕະລາຍ ແລະ ມີຄວາມສ່ຽງສູງທີ່ຈະເປັນຜົນກະທົບດ້ານສິ່ງແວດລ້ອມ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍກິດຈະການທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ.

**ມາດຕາ 10 ການສະເໜີຂໍສ້າງຕັ້ງໂຮງງານ**

ຜູ້ທີ່ມີຈຸດປະສົງລົງທຶນສ້າງຕັ້ງໂຮງງານ ທີ່ແມ່ນກິດຈະການຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ຕ້ອງປະກອບເອກະສານ ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ດັ່ງນີ້:

1. ໃບຄຳຮ້ອງຂໍສ້າງຕັ້ງໂຮງງານ ຕາມແບບພິມ ຮງ 1;
2. ບົດວິພາກເສດຖະກິດ-ເຕັກນິກໂຮງງານ ຕາມແບບພິມ ຮງ 17;
3. ໃບມອບສິດທະ ກໍລະນີທີ່ບໍ່ສາມາດມາພົວພັນດ້ວຍຕົນເອງ;
4. ສຳເນົາໃບທະບຽນວິສາຫະກິດ;
5. ສຳເນົາໃບສັນຍາເຊົ່າທີ່ດິນ, ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ.

**ມາດຕາ 11 ການພິຈາລະນາການສະເໜີຂໍສ້າງຕັ້ງໂຮງງານ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງໂຮງງານ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງປະຕິບັດດັ່ງນີ້:

1. ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງຂອງໃບຄຳຮ້ອງ ແລະ ເອກະສານທີ່ກ່ຽວຂ້ອງ;
2. ຈັດກອງປະຊຸມຄົ້ນຄວ້າເນື້ອໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ;
3. ລົງກວດກາທີ່ຕັ້ງໂຮງງານ.

### ມາດຕາ 12 ການລົງກວດກາທີ່ຕັ້ງໂຮງງານ

ການລົງກວດກາທີ່ຕັ້ງໂຮງງານ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

1. ໂຮງງານທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ໃຫ້ລົງກວດກາ ພາຍຫຼັງທີ່ໄດ້ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

2. ໂຮງງານທີ່ບໍ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ໃຫ້ລົງກວດກາພາຍຫຼັງ ທີ່ໄດ້ຮັບໃບສະເໜີກວດກາທີ່ຕັ້ງໂຮງງານຈາກຜູ້ລົງທຶນ ຕາມແບບພິມ ຮງ 4.

ການລົງກວດກາໂຮງງານ ຕ້ອງປະຕິບັດກ່ອນການກໍ່ສ້າງໂຮງງານ ແລະ ກວດກາຕາມມາດຕະຖານດ້ານທີ່ຕັ້ງໂຮງງານ ຕາມທີ່ກໍານົດໄວ້ໃນມາດຕາ 32 ຂອງຂໍ້ຕົກລົງສະບັບນີ້. ການກວດກາໂຮງງານແຕ່ລະຄັ້ງຕ້ອງເຮັດບົດບັນທຶກການກວດກາທີ່ຕັ້ງໂຮງງານ ຕາມແບບພິມ ຮງ 11. ກໍລະນີທີ່ຕັ້ງໂຮງງານບໍ່ໄດ້ຕາມມາດຕະຖານ ໃຫ້ລະບຸໃນບົດບັນທຶກກວດກາທີ່ຕັ້ງໂຮງງານ ແລະ ແຈ້ງໃຫ້ຜູ້ລົງທຶນຊອກຫາສະຖານທີ່ຕັ້ງໃໝ່;

ການພິຈາລະນາທີ່ຕັ້ງໂຮງງານຢູ່ໃນນິຄົມອຸດສາຫະກໍາ ຫຼື ເຂດເສດຖະກິດພິເສດ ແມ່ນໜ່ວຍງານຄຸ້ມຄອງນິຄົມອຸດສາຫະກໍາ ຫຼື ເຂດເສດຖະກິດພິເສດ ເປັນຜູ້ພິຈາລະນາ.

### ມາດຕາ 13 ການອອກໃບອະນຸຍາດສ້າງຕັ້ງໂຮງງານ

ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດສ້າງຕັ້ງໂຮງງານ ພາຍໃນຫ້າ ວັນລັດຖະການ ຖ້າເຫັນວ່າທີ່ຕັ້ງໂຮງງານຖືກຕ້ອງຕາມທີ່ກໍານົດໄວ້ໃນມາດຕາ 32 ຂອງຂໍ້ຕົກລົງສະບັບນີ້.

ໃບອະນຸຍາດສ້າງຕັ້ງໂຮງງານ ອອກໃຫ້ຄັ້ງດຽວ ແລະ ມີອາຍຸການນໍາໃຊ້ຕະຫຼອດໄລຍະເວລາການສ້າງຕັ້ງໂຮງງານ. ກໍລະນີຫາກບໍ່ດໍາເນີນການກໍ່ສ້າງໂຮງງານ ພາຍໃນ 12 ເດືອນ ແມ່ນຈະຖືກລຶບລ້າງ.

### ມາດຕາ 14 ການດໍາເນີນການກໍ່ສ້າງໂຮງງານ

ພາຍຫຼັງໄດ້ຮັບໃບອະນຸຍາດສ້າງຕັ້ງໂຮງງານ ຫຼື ໄດ້ຮັບການຢັ້ງຢືນທີ່ຕັ້ງໂຮງງານ, ຜູ້ລົງທຶນສາມາດດໍາເນີນການສະເໜີຂໍໃບອະນຸຍາດປຸກສ້າງ ຈາກຂະແໜງການກ່ຽວຂ້ອງ ແລະ ດໍາເນີນການກໍ່ສ້າງໂຮງງານ ຫຼັງຈາກໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂະແໜງການອຸດສາຫະກໍາ ແລະ ການຄ້າ ລົງຕິດຕາມການກໍ່ສ້າງໂຮງງານແຕ່ລະໄລຍະ ຕາມບົດວິພາກເສດຖະກິດ-ເຕັກນິກໂຮງງານ.

### ມາດຕາ 15 ຄຸນລັກສະນະ ແລະ ເນື້ອໃນ ຂອງໃບອະນຸຍາດສ້າງຕັ້ງໂຮງງານ

1. ໃບອະນຸຍາດສ້າງຕັ້ງໂຮງງານ ມີຄຸນລັກສະນະສະເພາະ ດັ່ງນີ້:

1.1 ເຈ້ຍແຂງ A4 ສີຂາວ ພື້ນລຽບ;

1.2 ຂອບເຈ້ຍເປັນລາຍລາວ ສີຂຽວເຂັ້ມ ຢູ່ທັງສີ່ມູມສາກຂອງເຈ້ຍ ແລະ ມີເສັ້ນຂີດຊື່ຈອດກັນກັບລາຍສີຂຽວເຂັ້ມ;

1.3 ດ້ານໃນຂອບເຈ້ຍ ມີກາໝາຍຊາດເປັນສີຢູ່ເບື້ອງເທິງ ແລະ ມີກາໝາຍ (Logo) ຂອງກົມອຸດສາຫະກໍາ ແລະ ຫັດຖະກໍາ ເປັນເງົາຢູ່ເຄິ່ງກາງຂອງເຈ້ຍ.

2. ໃບອະນຸຍາດສ້າງຕັ້ງໂຮງງານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

2.1 ຊື່ວິສາຫະກິດ, ຊື່ໂຮງງານ, ທີ່ຕັ້ງໂຮງງານ;

2.2 ກິດຈະການໂຮງງານ;

2.3 ເລກລະຫັດ LSIC 4 ຕົວເລກ ພ້ອມລະບຸຊື່ຜະລິດຕະພັນຂອງໂຮງງານ;

2.4 ເນື້ອໃນແນະນໍາກ່ຽວກັບຂັ້ນຕອນທີ່ຕ້ອງສືບຕໍ່ປະຕິບັດ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງໂຮງງານ.

## ໝວດທີ 2
## ການດຳເນີນກິດຈະການໂຮງງານ

**ມາດຕາ 16 ເງື່ອນໄຂການດຳເນີນກິດຈະການໂຮງງານ**

ການດຳເນີນກິດຈະການໂຮງງານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສຳເລັດການກໍ່ສ້າງໂຮງງານ;
2. ຜ່ານການຜະລິດທົດລອງ;
3. ໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານ.

**ມາດຕາ 17 ການສຳເລັດການກໍ່ສ້າງໂຮງງານ**

ການສຳເລັດການກໍ່ສ້າງໂຮງງານ ແມ່ນຜົນສຳເລັດຂອງການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສຸຂານາໄມ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆ ພາຍໃນໂຮງງານ ສຳເລັດເປັນທີ່ຮຽບຮ້ອຍ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ທີ່ສະເໜີໄວ້ຢູ່ໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ ໂດຍຜ່ານການກວດກາຄວາມຖືກຕ້ອງ ແລະ ຢັ້ງຢືນຮັບຮອງຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ແລ້ວ.

**ມາດຕາ 18 ການຜະລິດທົດລອງ**

ການຜະລິດທົດລອງ ແມ່ນການແລ່ນເຄື່ອງຈັກພາຍຫຼັງການຕິດຕັ້ງ ເພື່ອກວດສອບຄວາມພ້ອມຂອງເຄື່ອງຈັກ, ປະສິດທິພາບຂອງເຄື່ອງຈັກ ລວມທັງລະບົບຄວາມປອດໄພ, ລະບົບການກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ ໂດຍໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຂອງການອອກແບບ. ຖ້າຈຸດໃດຍັງບໍ່ຖືກຕ້ອງ ໃຫ້ປັບປຸງແກ້ໄຂ ແລ້ວຜະລິດທົດລອງເພື່ອກວດສອບຄືນໃໝ່.

ກ່ອນການຜະລິດທົດລອງ ຜູ້ດຳເນີນກິດຈະການໂຮງງານຕ້ອງຍື່ນໃບແຈ້ງການຜະລິດທົດລອງ ຕາມແບບພິມ ຮງ 5 ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ. ພາຍຫຼັງຂະແໜງການອຸດສາຫະກຳ ແລະ ການຄ້າ ໄດ້ຮັບໃບແຈ້ງການຜະລິດທົດລອງແລ້ວ ຕ້ອງລົງລາຍເຊັນຮັບຮູ້ໃສ່ໃບແຈ້ງການຜະລິດທົດລອງ ພາຍໃນ ຫ້າ ວັນລັດຖະການ ແລ້ວສົ່ງຄືນໃຫ້ໂຮງງານເພື່ອຊາບ ແລະ ສຳເນົາໄວ້ຂະແໜງການອຸດສາຫະກຳ ແລະ ການຄ້າ ໜຶ່ງສະບັບ ເພື່ອຊາບ ແລະ ຕິດຕາມ ການຜະລິດທົດລອງເປັນແຕ່ລະໄລຍະ.

ການຜະລິດທົດລອງໃຊ້ເວລາສູງສຸດບໍ່ເກີນ 90 ວັນ ແລະ ສາມາດສືບຕໍ່ຜະລິດທົດລອງໄດ້ອີກບໍ່ເກີນ 90 ວັນ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຂາຍຜະລິດຕະພັນຂອງໂຮງງານໄດ້.

**ມາດຕາ 19 ການສະເໜີຂໍດຳເນີນກິດຈະການໂຮງງານ**

ການສະເໜີຂໍດຳເນີນກິດຈະການໂຮງງານ ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ໃຫ້ປະຕິບັດ ດັ່ງນີ້:

1. ພາຍຫຼັງການຜະລິດທົດລອງ ກ່ອນດຳເນີນການຜະລິດຖາວອນ ຜູ້ດຳເນີນກິດຈະການໂຮງງານຕ້ອງປະກອບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ຈຳນວນ ສາມຊຸດ ຍື່ນຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ;

2. ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາມາດຕະຖານເຕັກນິກໂຮງງານ ພາຍໃນ ຫ້າວັນລັດຖະການ. ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕ້ອງແຈ້ງໃຫ້ຜູ້ສະເໜີຂໍດຳເນີນກິດຈະການໂຮງງານ ຮັບຊາບພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ ເພື່ອປັບປຸງຄືນໃໝ່.

### ມາດຕາ 20 ການປະກອບເອກະສານ ຂໍດຳເນີນກິດຈະການໂຮງງານ

ການສະເໜີຂໍດຳເນີນກິດຈະການໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ໃຫ້ປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ຕາມແບບພິມ ຮງ 2;
2. ໃບມອບສິດທະ ກໍລະນີທີ່ບໍ່ສາມາດມາພົວພັນດ້ວຍຕົນເອງ;
3. ບັນຊີເຄື່ອງຈັກໃນໂຮງງານ ຕາມແບບພິມ ຮງ 18;
4. ແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ຕາມແບບພິມ ອ;
5. ຮູບຖ່າຍຜູ້ອຳນວຍການໂຮງງານ ຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ ໃບ ຮູບຖ່າຍຕ້ອງບໍ່ເກີນ ຫົກເດືອນ;
6. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຂະໜາດເຈັ້ຍ A3 ເຊັ່ນ:
   6.1 ແຜນຜັງສະແດງໃຫ້ເຫັນທີ່ຕັ້ງໂຮງງານ ໃນຂອບເຂດລັດສະໝີ 200 ແມັດ;
   6.2 ແຜນຜັງສະແດງສິ່ງປຸກສ້າງໃນບໍລິເວນໂຮງງານ;
   6.3 ແຜນຜັງກໍ່ສ້າງອາຄານຜະລິດ ຮູບດ້ານໜ້າ, ຂ້າງ, ຫຼັງ ແລະ ຮູບຕັດ;
   6.4 ແຜນຜັງຕິດຕັ້ງເຄື່ອງຈັກ ແລະ ເຄື່ອງຍົກນ້ຳໜັກ ໂດຍຈັດລຽງຕາມເລກໝາຍບັນຊີເຄື່ອງຈັກ;
   6.5 ແຜນຜັງຕິດຕັ້ງເຕົາອົບ ແລະ ໝໍ້ຕົ້ມນ້ຳ ຫຼື ເຕົາສະຕີມ, ຖ້າມີ;
   6.6 ແຜນຜັງຕິດຕັ້ງລະບົບໄຟຟ້າ, ພັດລົມ ແລະ ລະບົບລະບາຍອາກາດ;
   6.7 ແຜນຜັງຕິດຕັ້ງລະບົບປ້ອງກັນອັນຕະລາຍ, ອັກຄີໄພ ແລະ ທາງອອກສຸກເສີນ;
   6.8 ແຜນຜັງການກໍ່ສ້າງລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອຂອງໂຮງງານ.
7. ສຳເນົາເອກະສານຄັດຕິດ ມີດັ່ງນີ້:
   7.1 ໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດລົງທຶນ;
   7.2 ໃບອະນຸຍາດສ້າງຕັ້ງໂຮງງານ ສຳລັບກິດຈະການທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ;
   7.3 ເອກະສານຢັ້ງຢືນການມອບພັນທະອາກອນ;
   7.4 ໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາສະເພາະ ຂອງວິຊາການທີ່ກ່ຽວຂ້ອງກັບກິດຈະການໂຮງງານ.

### ມາດຕາ 21 ການລົງກວດກາ ເພື່ອດຳເນີນກິດຈະການໂຮງງານ

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດການມາດຕະຖານເຕັກນິກໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນແຜນຜັງການກໍ່ສ້າງ, ລະບົບເຕັກນິກເຄື່ອງຈັກໂຮງງານ ແລະ ບົດວິພາກເສດຖະກິດ-ເຕັກນິກໂຮງງານ ທຽບໃສ່ຕົວຈິງ. ການລົງກວດກາຕ້ອງເຮັດບົດບັນທຶກ ຕາມແບບພິມ ຮງ 12.

ຜ່ານການກວດກາຫາກເຫັນວ່າ ຍັງບໍ່ສາມາດໃຫ້ດຳເນີນການຜະລິດໄດ້ ຍ້ອນວ່າຍັງບໍ່ທັນຮັບປະກັນດ້ານມາດຕະຖານເຕັກນິກສ່ວນໃດໜຶ່ງຂອງໂຮງງານ, ຄະນະກຳມະການກວດກາ ຕ້ອງແນະນຳເພື່ອປັບປຸງຄືນ ໂດຍໃຫ້ກຳນົດເວລາທີ່ຊັດເຈນໃນບົດບັນທຶກ.

ພາຍຫຼັງໄດ້ປັບປຸງຕາມຄຳແນະນຳໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອລົງກວດກາຄືນ ແລະ ເຮັດບົດບັນທຶກຜົນການປັບປຸງໂຮງງານ ຕາມແບບພິມ ຮງ 13. ໃນກໍລະນີບໍ່ສາມາດປັບປຸງທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ ສາມວັນ ລັດຖະການ ນັບແຕ່ມື້ໝົດກຳນົດເວລາໃນບົດບັນທຶກກວດກາໂຮງງານ.

### ມາດຕາ 22 ການພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ

ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມແບບພິມ ຮງ 8 ພາຍໃນ ຫ້າວັນ ລັດຖະການ ພາຍຫຼັງລົງກວດການມາດຕະຖານເຕັກນິກໂຮງງານ ແລະ ມີ

ບົດບັນທຶກກວດກາໂຮງງານ ຫຼື ບົດບັນທຶກຜົນການປັບປຸງໂຮງງານ ທີ່ເຫັນດີໃຫ້ດຳເນີນກິດຈະການໂຮງງານໄດ້.

ພາຍຫຼັງອອກໃບຢັ້ງຢືນດຳເນີນກິດຈະການໂຮງງານແລ້ວ ໂຮງງານຂະໜາດໃຫຍ່ຕ້ອງຈຳ້ກາຂອງກົມໃສ່ເອກະສານທັງໝົດ ແລະ ສຳເນົາໄວ້ກົມອຸດສາຫະກຳ ແລະ ຫັດຖະກຳ ໜຶ່ງຊຸດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໜຶ່ງຊຸດ ແລະ ໂຮງງານ ໜຶ່ງຊຸດ. ໂຮງງານຂະໜາດກາງ ແລະ ນ້ອຍ ຕ້ອງຈຳ້ກາຂອງພະແນກໃສ່ເອກະສານທັງໝົດ ແລະ ສຳເນົາໄວ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໜຶ່ງຊຸດ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ໜຶ່ງຊຸດ ແລະ ໂຮງງານ ໜຶ່ງຊຸດ ເພື່ອຄຸ້ມຄອງ, ຕິດຕາມກວດກາຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 23 ຄຸນລັກສະນະ ແລະ ເນື້ອໃນຂອງໃບຢັ້ງຢືນດຳເນີນກິດຈະການໂຮງງານ

1. ໃບຢັ້ງຢືນດຳເນີນກິດຈະການໂຮງງານ ມີຄຸນລັກສະນະ ດັ່ງນີ້:

1.1 ເຈ້ຍແຂງ A4 ສີຂາວ ພື້ນລຽບ;

1.2 ຂອບເຈ້ຍເປັນລາຍລາວ ສີທອງ ຢູ່ທັງສີ່ມູມສາກຂອງເຈ້ຍ ແລະ ມີເສັ້ນຂີດຕິງຕໍ່ຈອດກັນກັບລາຍສີທອງ;

1.3 ດ້ານໃນຂອບເຈ້ຍ ມີກາໝາຍຊາດເປັນສີຢູ່ເບື້ອງເທິງ ແລະ ມີກາໝາຍ (Logo) ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເງົາຢູ່ເຄິ່ງກາງຂອງເຈ້ຍ.

2. ໃບຢັ້ງຢືນດຳເນີນກິດຈະການໂຮງງານ ມີເນື້ອໃນດັ່ງນີ້:

2.1 ຊື່ວິສາຫະກິດ, ຊື່ໂຮງງານ, ທີ່ຕັ້ງໂຮງງານ, ຊື່ຜູ້ອຳນວຍການໂຮງງານ, ຮູບຖ່າຍຜູ້ອຳນວຍການໂຮງງານ;

2.2 ກິດຈະການໂຮງງານ;

2.3 ເລກລະຫັດ LSIC 4 ຕົວເລກ ທີ່ລະບຸຊື່ຜະລິດຕະພັນຫຼັກຂອງໂຮງງານ;

2.4 ເລກລະຫັດທະບຽນໂຮງງານ: ລະຫັດກົມ, ແຂວງ ຫຼື ນະຄອນຫຼວງ 2 ຕົວເລກ, ລະຫັດເມືອງ ຫຼື ນະຄອນ 2 ຕົວເລກ, ລະຫັດປີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານຄັ້ງທຳອິດ 4 ຕົວເລກ ແລະ ລະຫັດຈຳນວນໂຮງງານທັງໝົດ 4 ຕົວເລກ;

2.5 ອາຍຸການນຳໃຊ້ໃບຢັ້ງຢືນດຳເນີນກິດຈະການໂຮງງານ.

## ມາດຕາ 24 ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ

ໃບຢັ້ງຢືນດຳເນີນກິດຈະການໂຮງງານ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ກໍລະນີໂຮງງານທີ່ມີຄວາມສ່ຽງສູງຕໍ່ ສຸຂະພາບຂອງຜູ້ອອກແຮງງານຢູ່ໃນໂຮງງານ ແລະ ສິ່ງແວດລ້ອມ ທີ່ຕ້ອງຕິດຕາມກວດກາດ້ານມາດຕະຖານເຕັກນິກສະເພາະ ແຕ່ລະໄລຍະ ແມ່ນສາມາດກຳນົດອາຍຸນຳໃຊ້ ຕ່ຳກວ່າ ສາມ ປີ.

ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕ້ອງສະແດງໄວ້ບ່ອນທີ່ເຫັນໄດ້ງ່າຍ ຢູ່ພາຍໃນໂຮງງານ.

## ມາດຕາ 25 ການຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ທີ່ມີຈຸດປະສົງຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕ້ອງສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ 30 ວັນ ກ່ອນໃບຢັ້ງຢືນໝົດອາຍຸ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມແບບພິມ ຮງ 2;
2. ບົດລາຍງານສະພາບການດຳເນີນກິດຈະການໂຮງງານ ຕາມແບບພິມ ຮງ 19;
3. ເອກະສານຕາມມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ ສະເພາະເອກະສານທີ່ມີການປ່ຽນແປງເນື້ອໃນ,

ການພິຈາລະນາຕໍ່ອາຍຸ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໃຫ້ປະຕິບັດຄືກັນກັບ ຂັ້ນຕອນການພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມມາດຕາ 21 ແລະ 22 ຂອງຂໍ້ຕົກລົງສະບັບນີ້.

ການຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານແຕ່ລະຄັ້ງ ໃຫ້ມີກຳນົດເວລາຄືກັນກັບສະບັບຕົ້ນ. ກໍລະນີສັນຍາເຊົ່າດິນປຸກສ້າງໂຮງງານ ຍັງມີອາຍຸຕໍ່າກວ່າ ສາມປີ ແມ່ນໃຫ້ກຳນົດເວລາຕາມອາຍຸສັນຍາເຊົ່າທີ່ຍັງເຫຼືອ.

## ມາດຕາ 26 ການຢຸດເຊົາການດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ສາມາດຢຸດເຊົາການດຳເນີນກິດຈະການໂຮງງານ ຊົ່ວຄາວ ຫຼື ຖາວອນ ໂດຍຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຢຸດເຊົາຊົ່ວຄາວ: ຜູ້ດຳເນີນກິດຈະການໂຮງງານ ຈະຢຸດເຊົາການດຳເນີນກິດຈະການໂຮງງານຊົ່ວຄາວ ຕ້ອງປະກອບຄຳຮ້ອງຂໍຢຸດເຊົາ ຕາມແບບພິມ ຮງ 3 ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ 10 ວັນກ່ອນມື້ຢຸດເຊົາ ເພື່ອພິຈາລະນາອອກໃບຢັ້ງຢືນການຢຸດເຊົາຊົ່ວຄາວ ຕາມແບບພິມ ຮງ 6. ໃບຢັ້ງຢືນການຢຸດເຊົາຊົ່ວຄາວ ມີອາຍຸສູງສຸດ ສອງປີ ສາມາດຕໍ່ໄດ້ຕາມແຕ່ລະກໍລະນີ. ພາຍຫຼັງຢຸດເຊົາແລ້ວ ກ່ອນຈະດຳເນີນກິດຈະການໂຮງງານຄືນໃໝ່ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອກວດກາສະພາບໂຮງງານ ແລະ ພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານຄືນໃໝ່. ໃນການພິຈາລະນາ ໃຫ້ປະຕິບັດຕາມໃນມາດຕາ 21 ແລະ 22 ຂອງຂໍ້ຕົກລົງສະບັບນີ້.

2. ການຢຸດເຊົາຖາວອນ: ຜູ້ດຳເນີນກິດຈະການໂຮງງານ ຈະຢຸດເຊົາການດຳເນີນກິດຈະການໂຮງງານຖາວອນ ຕ້ອງປະກອບຄຳຮ້ອງຂໍຢຸດເຊົາ ຕາມແບບພິມ ຮງ 3 ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ 10 ວັນກ່ອນມື້ຢຸດເຊົາ ເພື່ອພິຈາລະນາອອກໃບຢັ້ງຢືນການຢຸດເຊົາຖາວອນ ຕາມແບບພິມ ຮງ 6 ພ້ອມທັງລຶບລ້າງໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບເດີມ. ກໍລະນີຢຸດເຊົາສ່ວນໃດໜຶ່ງຂອງໂຮງງານ ຕ້ອງພິຈາລະນາດັດແກ້ ໃບຢັ້ງຢືນດຳເນີນກິດຈະການໂຮງງານ.

ກິດຈະການທີ່ມີສິ່ງເສດເຫຼືອອັນຕະລາຍຢູ່ພາຍໃນໂຮງງານ, ກ່ອນຢຸດເຊົາດຳເນີນກິດຈະການໂຮງງານຖາວອນ ຕ້ອງກຳຈັດ ຫຼື ບຳບັດສິ່ງເສດເຫຼືອອັນຕະລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 27 ການຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ

ການຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ ໃຫ້ປະຕິບັດຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ມີການຢຸດເຊົາການດຳເນີນກິດຈະການໂຮງງານຖາວອນ;
2. ມີອຸປະຕິເຫດຮ້າຍແຮງເກີດຂຶ້ນພາຍໃນໂຮງງານ ເຮັດໃຫ້ເຄື່ອງຈັກ ແລະ ໂຮງງານ ເປ່ເພເສຍຫາຍຮ້າຍແຮງ ແລະ ບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບດີປົກກະຕິ;
3. ເຄື່ອນໄຫວຜິດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໂດຍເຈຕະນາ ເປັນຕົ້ນ ລະເມີດຂໍ້ຫ້າມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ມີຄຳຕັດສິນຂອງສານ.

## ມາດຕາ 28 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ສະບັບປ່ຽນແທນ

ໃນກໍລະນີໃບຢັ້ງຢືນດຳເນີນກິດຈະການໂຮງງານເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງຕໍ່ບ້ານ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມລະບຽບການ ແລ້ວຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ພາຍໃນ 15 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນແຈ້ງເສຍຫາຍຈາກບ້ານ ເພື່ອສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບປ່ຽນແທນ.

**ມາດຕາ 29 ການແຈ້ງດຳເນີນກິດຈະການ ໂຮງງານແບບຄອບຄົວ**

1. ໂຮງງານແບບຄອບຄົວ ສາມາດດຳເນີນກິດຈະການໄດ້ເລີຍ ບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງແຈ້ງໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຮັບຊາບ ໂດຍໃຫ້ປະກອບເອກະສານ ດັ່ງນີ້:

1) ໃບແຈ້ງດຳເນີນກິດຈະການໂຮງງານ ຕາມແບບພິມ ຣດ;

2) ບັນຊີເຄື່ອງຈັກ ຕາມແບບພິມ ຣງ 18;

3) ສຳເນົາໃບທະບຽນວິສາຫະກິດ;

4) ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ.

ພາຍຫຼັງໄດ້ຮັບໃບແຈ້ງດຳເນີນກິດຈະການໂຮງງານ ຄົບຖ້ວນ ແລະ ຖືກຕ້ອງ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕ້ອງລົງລາຍເຊັນຮັບຮູ້ໃສ່ໃບແຈ້ງດຳເນີນກິດຈະການພາຍໃນ ສາມວັນ ລັດຖະການ. ເອກະສານໜຶ່ງຊຸດ ເກັບຮັກສາໄວ້ໂຮງງານ ແລະ ອີກໜຶ່ງຊຸດ ສຳເນົາໄວ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອຕິດຕາມການເຄື່ອນໄຫວ ແລະ ເກັບກຳຂໍ້ມູນສະຖິຕິໂຮງງານ;

ໂຮງງານແບບຄອບຄົວ ສາມາດດຳເນີນກິດຈະການໄດ້ຕະຫຼອດໄລຍະການດຳເນີນກິດຈະການ ແຕ່ຕ້ອງປະຕິບັດຕາມມາດຕະຖານເຕັກນິກໂຮງງານ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ກໍລະນີຫາກຢຸດເຊົາການດຳເນີນກິດຈະການ ຕ້ອງແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຊາບ. ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ລົງຕິດຕາມ ກວດກາໂຮງງານແບບຄອບຄົວ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

2. ການດຳເນີນກິດຈະການທີ່ມີຄວາມສ່ຽງສູງ ເປັນຕົ້ນ ການຫຼອມ ຫຼື ປຸງແຕ່ງເສດອຸດສາຫະກຳ, ແຮ່ທາດໂລຫະ, ອະໂລຫະ, ຢາງປລາສະຕິກ, ເຈ້ຍ, ຊີມັງ, ປຸງແຕ່ງໄມ້, ຕົ້ມກັ່ນນ້ຳມັນ, ອາຍແກັດສ໌, ອົກຊີເຈນ, ໄນໂຕຣເຈນ, ອາຍກາກໂບນິກ, ທາດລະເບີດ, ດອກໄມ້ໄຟ, ເຄມີ ແລະ ວັດຖຸໄວໄຟ ຕ້ອງໄດ້ຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມແຕ່ລະກໍລະນີ.

**ມາດຕາ 30 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບປ່ຽນແທນ ແລະ ໃບແຈ້ງດຳເນີນກິດຈະການໂຮງງານແບບຄອບຄົວ ໃຫ້ຄິດໄລ່ຕາມແຮງມ້າປຽບທຽບເຄື່ອງຈັກ ຫຼື ຈຳນວນແຮງງານທັງໝົດ ທີ່ນຳໃຊ້ຢູ່ພາຍໃນໂຮງງານ ແລະ ເກັບຕາມອັດຕາທີ່ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 3
## ມາດຕະຖານເຕັກນິກໂຮງງານ

**ມາດຕາ 31 ມາດຕະຖານເຕັກນິກໂຮງງານ**

ມາດຕະຖານເຕັກນິກໂຮງງານ ປະກອບດ້ວຍມາດຕະຖານ ດັ່ງນີ້:

1. ທີ່ຕັ້ງໂຮງງານ;
2. ສິ່ງປຸກສ້າງໃນໂຮງງານ;
3. ອາຄານໂຮງງານ;
4. ເຄື່ອງຈັກ;
5. ຂະບວນການຜະລິດ;
6. ວິຊາການ ແລະ ຜູ້ອອກແຮງງານ;

7. ຄວາມປອດໄພ ໂຮງງານ ແລະ ຜູ້ອອກແຮງງານ;

8. ສຸຂານາໄມໂຮງງານ;

9. ສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມ;

10. ສິ່ງແວດລ້ອມໂຮງງານ;

11. ການບໍລິຫານໂຮງງານ.

ການສ້າງຕັ້ງໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງປະຕິບັດໃຫ້ໄດ້ມາດຕະຖານເຕັກນິກໂຮງງານຄົບຖ້ວນທຸກຂໍ້ ໃນວັກທີໜຶ່ງຂອງມາດຕານີ້.

ໂຮງງານແບບຄອບຄົວ ຕ້ອງປະຕິບັດໃຫ້ໄດ້ມາດຕະຖານເຕັກນິກໂຮງງານ ຕາມຂໍ້ 1, 3, 4, 7, 8, 9 ແລະ 10 ໃນວັກທີໜຶ່ງຂອງມາດຕານີ້.

### ມາດຕາ 32 ທີ່ຕັ້ງໂຮງງານ

1. ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1.1 ບໍ່ຕັ້ງໂຮງງານຢູ່ໃນ ຫຼື ຕິດກັບໂຮງຮຽນ, ໂຮງໝໍ, ວັດ ແລະ ແຫຼ່ງວັດທະນະທຳ;

1.2 ໂຮງງານທີ່ມີຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມ ລະດັບກາງ ແລະ ລະດັບສູງ ບໍ່ໃຫ້ຕັ້ງຢູ່ໃນເຂດຊຸມຊົນ;

1.3 ໂຮງງານທີ່ຈະຕັ້ງຢູ່ໃນເຂດຫ້າມທາງການ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ແຫຼ່ງຕົ້ນນ້ຳ, ເຂດອະນຸລັກຊີວະນາໆພັນ ແລະ ອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

1.4 ມີເນື້ອທີ່ເໝາະສົມກັບການດຳເນີນກິດຈະການ ຕາມຂະໜາດ ແລະ ປະເພດໂຮງງານ;

1.5 ມີເສັ້ນທາງເຂົ້າ-ອອກ ສະດວກ.

2. ໂຮງງານແບບຄອບຄົວ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

2.1 ໂຮງງານທີ່ມີຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມ ລະດັບກາງ ແລະ ລະດັບສູງ ບໍ່ໃຫ້ຕັ້ງຢູ່ໃນເຂດຊຸມຊົນ;

2.2 ໂຮງງານທີ່ຈະຕັ້ງຢູ່ໃນ ຫຼື ຕິດກັບແຫຼ່ງວັດທະນະທຳ, ເຂດປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ແຫຼ່ງຕົ້ນນ້ຳ, ເຂດອະນຸລັກຊີວະນາໆພັນ ແລະ ອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

2.3 ໂຮງງານທີ່ຈະຕັ້ງຕິດກັບໂຮງຮຽນ, ໂຮງໝໍ ແລະ ວັດ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

ການຈັດແບ່ງລະດັບຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມໂຮງງານ ໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການຈັດລະດັບຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມ ໂຮງງານອຸດສາຫະກຳປຸງແຕ່ງ.

ມາດຕະຖານເຕັກນິກດ້ານທີ່ຕັ້ງໂຮງງານ ສຳລັບໂຮງງານທີ່ຕັ້ງຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ ແມ່ນໃຫ້ປະຕິບັດຕາມການຈັດສັນຂອງເຂດດັ່ງກ່າວ.

### ມາດຕາ 33 ສິ່ງປຸກສ້າງໃນໂຮງງານ

ສິ່ງປຸກສ້າງໃນໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຂອບເຂດເນື້ອທີ່ກວ້າງຂວາງ ເໝາະສົມກັບກິດຈະການ;
2. ມີເສັ້ນທາງເຂົ້າ-ອອກ ສະດວກ ແລະ ບໍ່ກີດຂວາງການສັນຈອນ;
3. ມີກຳແພງ ຫຼື ຮົ້ວອ້ອມຮອບທີ່ແໜ້ນໜາແຂງແຮງ ແລະ ມີປະຕູທາງເຂົ້າ-ອອກ ກວ້າງຂວາງດີ;

4. ມີຫ້ອງການບໍລິຫານ, ອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ, ຫ້ອງອາຫານ, ຫ້ອງປະຖົມພະຍາບານ ສໍາລັບໂຮງງານຂະໜາດໃຫຍ່, ບ່ອນພັກຜ່ອນ, ບ່ອນຈອດລົດ ແລະ ຫ້ອງນໍ້າ. ໂຮງງານທີ່ມີມົນລະພິດ ຕ້ອງມີລະບົບບໍາບັດ ແລະ ກໍາຈັດສິ່ງເສດເຫຼືອໂຮງງານ;

5. ໂຮງງານທີ່ສ້າງຕັ້ງໃໝ່, ອາຄານຜະລິດ, ລະບົບບໍາບັດ ແລະ ກໍາຈັດສິ່ງເສດເຫຼືອໂຮງງານ ຕ້ອງຕັ້ງຢູ່ຫ່າງຈາກຂອບຮົ້ວໂຮງງານ ຢ່າງໜ້ອຍ ສີ່ ແມັດຂຶ້ນໄປ;

6. ຕ້ອງຕິດປ້າຍຊື່ໂຮງງານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 34 ອາຄານໂຮງງານ

1. ອາຄານໂຮງງານຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫຍ່ ຕ້ອງມີຄຸນລັກສະນະ ດັ່ງນີ້:

1.1 ໂຄງສ້າງອາຄານ ຕ້ອງແໜ້ນໜາແຂງແຮງ, ທົນທານຕໍ່ແຮງກະທົບຕ່າງໆ ແລະ ເໝາະສົມກັບການດໍາເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກຈາກບໍລິສັດອອກແບບກໍ່ສ້າງທີ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບການຢັ້ງຢືນດ້ານເຕັກນິກຈາກຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ;

1.2 ພື້ນທີ່ອາຄານ ໃຫ້ຈັດສັນເປັນລະບົບດີ, ບໍ່ມີສິ່ງກີດຂວາງທາງຍ່າງ ແລະ ເປັນລະບຽບຮຽບຮ້ອຍດີ;

1.3 ມີຊ່ອງລະບາຍອາກາດທີ່ເໝາະສົມ ແລະ ພຽງພໍ ໂດຍບໍ່ໃຫ້ຫຼຸດໜຶ່ງສ່ວນສິບ ຂອງພື້ນທີ່ຫ້ອງ ຫຼື ມີການລະບາຍອາກາດບໍ່ໃຫ້ຫຼຸດ 0,5 ແມັດກ້ອນຕໍ່ນາທີ ຕໍ່ຜູ້ອອກແຮງງານໜຶ່ງຄົນ;

1.4 ຕິດຕັ້ງພັດລົມ, ແອເຢັນ, ລະບົບລະບາຍອາກາດ ແລະ ອື່ນໆ ຕາມຄວາມເໝາະສົມກັບແຕ່ລະປະເພດໂຮງງານ. ບ່ອນເຮັດວຽກ ຫຼື ຂອດງານ ທີ່ມີກິ່ນຂີວ ຫຼື ມີຄວາມຮ້ອນສູງ ຕ້ອງຕິດຕັ້ງເຄື່ອງດູດອາກາດ ຫຼື ພັດລົມ ໂດຍໃຫ້ສົມສ່ວນກັບເນື້ອທີ່ເຮັດວຽກ ແລະ ຈໍານວນຜູ້ອອກແຮງງານ;

1.5 ມີແສງສະຫວ່າງພຽງພໍ ແລະ ເໝາະສົມກັບແຕ່ລະປະເພດໂຮງງານ;

1.6 ຝາອາຄານຕ້ອງເຮັດຈາກວັດສະດຸທີ່ສາມາດເກັບສຽງດັງ ກໍລະນີເຄື່ອງຈັກມີສຽງດັງເກີນຄ່າກໍານົດ;

1.7 ມີປະຕູທາງອອກສຸກເສີນຢ່າງໜ້ອຍໜຶ່ງບ່ອນຂຶ້ນໄປ ໃຫ້ມີໄລຍະຫ່າງກັນຕາມຄວາມເໝາະສົມ ແລະ ຕິດປ້າຍບອກໃຫ້ເຫັນໄດ້ງ່າຍ, ບານປະຕູທາງອອກສຸກເສີນ ຕ້ອງເປັນຊະນິດຍູ້ເປີດອອກງ່າຍ ແລະ ບໍ່ມີສິ່ງກີດຂວາງໃນເວລານໍາໃຊ້. ອາຄານໂຮງງານທີ່ມີສາມຊັ້ນຂຶ້ນໄປ ຕ້ອງມີຂັ້ນໄດສຸກເສີນ ລະຫວ່າງຊັ້ນ ຢ່າງໜ້ອຍໜຶ່ງບ່ອນ;

1.8 ຄວາມສູງຂອງອາຄານ ລະຫວ່າງພື້ນຫາເພດານ ແລະ ລະຫວ່າງຊັ້ນ ບໍ່ໃຫ້ຫຼຸດ 3,5 ແມັດ;

1.9 ພື້ນເຮັດດ້ວຍເບຕົງ, ບໍ່ມີຮອຍແຕກແຫງ, ບໍ່ມີນໍ້າຂັງ ຫຼື ມື່ນ ແລະ ອະນາໄມພື້ນໃຫ້ສະອາດ;

1.10 ອາຄານຕ້ອງມີເນື້ອທີ່ເໝາະສົມກັບ ຈໍານວນຜູ້ອອກແຮງງານ ຊຶ່ງອັດຕາສ່ວນບໍ່ໃຫ້ຫຼຸດ 1,5 ຫາ 3 ແມັດມົນທົນ ຕໍ່ຜູ້ອອກແຮງງານໜຶ່ງຄົນ ໂດຍຂຶ້ນກັບປະເພດກິດຈະການໂຮງງານ;

1.11 ວັດສະດຸທີ່ໃຊ້ກໍ່ສ້າງອາຄານໂຮງງານ ຕ້ອງມີຄວາມເໝາະສົມກັບປະເພດໂຮງງານ, ບໍ່ຕິດໄຟໄດ້ງ່າຍ, ບໍ່ທໍາປະຕິກິລິຍາທີ່ເປັນສາເຫດໃຫ້ເກີດມີຄວາມສ່ຽງຕໍ່ການລະເບີດ ຫຼື ເກີດອັກຄີໄພໄດ້ງ່າຍ;

1.12 ພາຍໃນອາຄານໂຮງງານ ບໍ່ໃຫ້ມີສິ່ງກີດຂວາງທາງຍ່າງ ຫຼື ບ່ອນເຮັດວຽກ, ໃຫ້ຕິດປ້າຍບອກຂະບວນການຜະລິດຢູ່ແຕ່ລະບ່ອນ ແລະ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ;

1.13 ມີຮ່ອງລະບາຍນໍ້າເສຍ ໄປຫາອ່າງບໍາບັດນໍ້າເສຍພາຍໃນໂຮງງານ ຫຼື ຈາກໂຮງງານ ໄປຫາຮ່ອງລະບາຍນໍ້າສາທາລະນະ ໂດຍຂຶ້ນກັບປະເພດ ແລະ ລະດັບຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມໂຮງງານ;

1.14 ໂຮງງານຜະລິດອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ ໃຫ້ປະຕິບັດຕາມຄຸນລັກສະນະສະເພາະຂອງອາຄານ ທີ່ຮັບປະກັນດ້ານສຸຂານາໄມ ໂດຍໃຫ້ວິຊາການເຕັກນິກທີ່ກ່ຽວຂ້ອງ ເປັນຜູ້ຢັ້ງຢືນສະເພາະ;

1.15 ໂຮງງານທີ່ນໍາໃຊ້ເຄມີ, ການເກັບຮັກສາເຄມີ ໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການເກັບຮັກສາເຄມີ.

2. ອາຄານຜະລິດຂອງໂຮງງານແບບຄອບຄົວ ຕ້ອງມີຄຸນລັກສະນະ ດັ່ງນີ້:

2.1 ແໜ້ນໜາແຂງແຮງ, ເໝາະສົມກັບການດຳເນີນກິດຈະການ ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ;

2.2 ພື້ນຕ້ອງເຮັດດ້ວຍເບຕົງທີ່ແໜ້ນໜາແຂງແຮງ;

2.3 ຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເປັນຕົ້ນ ໄຟຟ້າແສງສະຫວ່າງ ແລະ ໄຟຟ້າເຄື່ອງຈັກ;

2.4 ຕິດຕັ້ງພັດລົມ, ແອເຢັນ, ລະບົບລະບາຍອາກາດ ແລະ ອື່ນໆ ຕາມຄວາມເໝາະສົມ.

## ມາດຕາ 35 ເຄື່ອງຈັກ

1. ເຄື່ອງຈັກທີ່ນຳໃຊ້ຢູ່ໃນໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີຄຸນລັກສະນະ ດັ່ງນີ້:

1.1 ເຄື່ອງຈັກທີ່ຈະຕິດຕັ້ງໃໝ່ ຕ້ອງເປັນເຄື່ອງຈັກໃໝ່ ຫຼື ເຄື່ອງຈັກທີ່ໃຊ້ແລ້ວ ຕ້ອງມີຄຸນນະພາບດີ ແລະ ມີສະມັດຕະພາບທຽບໃສ່ເຄື່ອງຈັກໃໝ່ 80% ຂຶ້ນໄປ;

1.2 ເຕັກໂນໂລຊີທີ່ດີ, ເໝາະສົມກັບຍຸກສະໄໝ, ມີປະສິດທິພາບດີ, ປະຢັດວັດຖຸດິບ, ປະຢັດພະລັງງານ ແລະ ມີມົນລະພິດຕ່ຳ;

1.3 ຖືກກັບເປົ້າໝາຍການນຳໃຊ້, ຮັບປະກັນໃຫ້ຜະລິດຕະພັນມີຄຸນນະພາບ ແລະ ໄດ້ມາດຕະຖານດີ;

1.4 ມີຄວາມປອດໄພ, ບໍ່ມີຄວາມສ່ຽງຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ;

1.5 ມີຝາຄອບ, ຕາໜ່າງເຫຼັກປ້ອງກັນ ຫຼື ສິ່ງກັ້ນບັງໃສ່ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້, ໃບເລື່ອຍ ແລະ ບ່ອນທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ;

1.6 ຕິດຕັ້ງ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ;

1.7 ຂຶ້ນບັນຊີເຄື່ອງຈັກ ເປັນຕົ້ນ ຈຳນວນເຄື່ອງຈັກ, ກຳລັງແຮງ, ພະລັງງານທີ່ນຳໃຊ້, ຍີ່ຫໍ້, ປະເທດຜະລິດ, ປີຜະລິດ ແລະ ມີຄູ່ມືການນຳໃຊ້ ຕາມແບບພິມ ຮງ 18 ແລະ ຂຶ້ນທະບຽນເຄື່ອງຈັກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

1.8 ມີແຜນຕິດຕາມກວດກາ, ບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ໃຫ້ຢູ່ໃນສະພາບດີເປັນປົກກະຕິ.

2. ເຄື່ອງຈັກທີ່ນຳໃຊ້ຢູ່ໃນໂຮງງານແບບຄອບຄົວ ຕ້ອງມີຄຸນລັກສະນະ ດັ່ງນີ້:

2.1 ເຄື່ອງຈັກທີ່ຈະຕິດຕັ້ງໃໝ່ ຕ້ອງເປັນເຄື່ອງຈັກໃໝ່ ຫຼື ເຄື່ອງຈັກທີ່ໃຊ້ແລ້ວ ຕ້ອງມີຄຸນນະພາບດີ ແລະ ມີສະມັດຕະພາບທຽບໃສ່ເຄື່ອງຈັກໃໝ່ ແປດສິບສ່ວນຮ້ອຍ ຂຶ້ນໄປ;

2.2 ຖືກກັບເປົ້າໝາຍການນຳໃຊ້, ຮັບປະກັນໃຫ້ຜະລິດຕະພັນມີຄຸນນະພາບ ແລະ ໄດ້ມາດຕະຖານດີ;

2.3 ຕິດຕັ້ງ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ;

2.4 ຂຶ້ນບັນຊີເຄື່ອງຈັກ ເປັນຕົ້ນ ຈຳນວນເຄື່ອງຈັກ, ກຳລັງແຮງ, ພະລັງງານທີ່ນຳໃຊ້, ຍີ່ຫໍ້, ປະເທດຜະລິດ, ປີຜະລິດ ແລະ ເປົ້າໝາຍການນຳໃຊ້ ຕາມແບບພິມ ຮງ 18 ແລະ ຂຶ້ນທະບຽນເຄື່ອງຈັກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 36 ຂະບວນການຜະລິດ

ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີຂະບວນການຜະລິດ ດັ່ງນີ້:

1. ເປັນລະບົບຕ່ອງໂສ້ການຜະລິດແບບຕໍ່ເນື່ອງ ຕາມລະບົບເຕັກນິກ ແລະ ເຕັກໂນໂລຊີ ທີ່ນຳໃຊ້ໃນແຕ່ລະປະເພດກິດຈະການ;

2. ໂຮງງານທີ່ນຳໃຊ້ວັດຖຸດິບຈາກຊັບພະຍາກອນທຳມະຊາດ ໃຫ້ມີລະບົບການຄຸ້ມຄອງຂະບວນການຜະລິດ ເປັນຕົ້ນ ການຕິດຕາມສິນເຂົ້າວັດຖຸດິບ ແລະ ສິນອອກຜະລິດຕະພັນ, ການນຳໃຊ້ວັດຖຸດິບ, ພະລັງງານ ຢ່າງປະຢັດ ແລະ ມີປະສິດທິຜົນດີ;

3. ຕິດຕັ້ງປ້າຍບອກຂະບວນການຜະລິດ ຢູ່ແຕ່ລະຂອດການຜະລິດ ໃຫ້ຈະແຈ້ງ;

4. ບ່ອນການຜະລິດທີ່ມີສິ່ງເສດເຫຼືອ ຕ້ອງຕິດຕັ້ງລະບົບການກຳຈັດ ເພື່ອໄປບຳບັດບໍ່ໃຫ້ເກີນຄ່າມາດຕະຖານທີ່ກຳນົດໄວ້.

**ມາດຕາ 37 ວິຊາການ ແລະ ຜູ້ອອກແຮງງານ**

ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີເງື່ອນໄຂດ້ານ ວິຊາການ ແລະ ຜູ້ອອກແຮງງານ ດັ່ງນີ້:

1. ມີວິຊາການສະເພາະດ້ານຕາມປະເພດກິດຈະການ ທີ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ ແລະ ມີປະສົບການ ປະຈຳຢູ່ໂຮງງານ ຢ່າງໜ້ອຍໜຶ່ງຄົນ;

2. ມີວິຊາການສະເພາະປະຈຳໂຮງງານ ສຳລັບໂຮງງານທີ່ນຳໃຊ້ໝໍ້ຕົ້ມນ້ຳ, ຜະລິດເຄມີ ຫຼື ນຳໃຊ້ເຄມີ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຈັດຝຶກອົບຮົມໃຫ້ ວິຊາການ ແລະ ຜູ້ອອກແຮງງານ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;

4. ມີສຸຂະພາບແຂງແຮງດີ, ບໍ່ມີພະຍາດຕິດແປດ ຫຼື ພະຍາດອາຊີບ ແລະ ບໍ່ເປັນບ້າເສຍຈິດ;

5. ກວດສຸຂະພາບກ່ອນຮັບເຂົ້າເຮັດວຽກ ແລະ ໃຫ້ກວດສຸຂະພາບເປັນປົກກະຕິຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ໂດຍຂຶ້ນກັບປະເພດກິດຈະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 ຄວາມປອດໄພໂຮງງານ ແລະ ຜູ້ອອກແຮງງານ**

1. ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີມາດຕະຖານດ້ານຄວາມປອດໄພໂຮງງານ ແລະ ຜູ້ອອກແຮງານ ດັ່ງນີ້:

1.1 ໃຫ້ມີໜ່ວຍງານ ຫຼື ຜູ້ຮັບຜິດຊອບຄວາມປອດໄພປະຈຳໂຮງງານໃຫ້ພຽງພໍ ເໝາະສົມກັບປະເພດ ແລະ ຂະໜາດຂອງໂຮງງານ, ໂດຍມີໜ້າທີ່ໃນການຝຶກອົບຮົມ, ຕິດຕາມກວດກາ, ບັນທຶກອຸປະຕິເຫດ ແລະ ລາຍງານກ່ຽວກັບວຽກງານຄວາມປອດໄພໂຮງງານ ແນໃສ່ຫຼີກລ້ຽງ ອຸປະຕິເຫດໂຮງງານ, ອຸປະຕິເຫດແຮງງານ, ພະຍາດອາຊີບ ແລະ ຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ;

1.2 ຜູ້ອອກແຮງງານທຸກຄົນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານ ຄວາມປອດໄພໂຮງງານ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;

1.3 ຜູ້ອອກແຮງງານທຸກຄົນ ຕ້ອງໃສ່ອຸປະກອນປ້ອງກັນແຮງງານທີ່ຈຳເປັນ ຕາມແຕ່ລະວຽກທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ເກີບ, ໝວກກັນກະທົບ, ອຸປະກອນປິດປາກ-ປິດດັງ, ແວ່ນຕາ, ຖົງມື ແລະ ອື່ນໆ ເພື່ອປ້ອງກັນຝຸ່ນ, ກິ່ນ, ຄວັນ, ແສງ, ສຽງດັງ, ຄວາມຮ້ອນ, ຄວາມເຢັນ ແລະ ມີບ່ອນເກັບມ້ຽນເຄື່ອງອຸປະກອນດັ່ງກ່າວໃຫ້ປອດໄພ;

1.4 ແຕ້ມເສັ້ນຂອບເຂດໃສ່ສະຖານທີ່ທີ່ເປັນອັນຕະລາຍ ຫຼື ບ່ອນທີ່ມີຄວາມສ່ຽງຈະເກີດອຸປະຕິເຫດ ແລະ ໃຫ້ຕິດຕັ້ງປ້າຍເຕືອນ, ປ້າຍຫ້າມ ແລະ ປ້າຍແນະນຳ ເປັນພາສາລາວ ແລະ ພາສາຕ່າງປະເທດ;

1.5 ຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ໃນໂຮງງານໃຫ້ພຽງພໍ ເປັນຕົ້ນ ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟທີ່ຮັບປະກັນ ແລະ ສາມາດນຳໃຊ້ໄດ້. ກິດຈະການໂຮງງານທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ທີ່ມີຄວາມສ່ຽງສູງ ເປັນຕົ້ນ ໂຮງງານຫຼອມ ຫຼື ປຸງແຕ່ງ ເສດອຸດສາຫະກຳ, ແຮ່ທາດໂລຫະ ຫຼື ອະໂລຫະ, ຢາງປລາສະຕິກ, ເຈ້ຍ, ຊີມັງ, ປຸງແຕ່ງໄມ້, ຕົ້ມກັ່ນນ້ຳມັນ, ອາຍແກັດສ໌, ອົກຊີເຈນ, ໄນໂຕຣເຈນ, ອາຍກາກໂບນິກ, ທາດລະເບີດ, ດອກໄມ້ໄຟ, ເຄມີ ແລະ ວັດຖຸໄວໄຟອື່ນໆ ຕ້ອງອອກແບບແຜນຜັງ ແລະ ຕິດຕັ້ງລະບົບປ້ອງກັນອັກຄີໄພຈາກວິຊາການເຕັກນິກສະເພາະ ແລະ ໄດ້ຮັບການຢັ້ງຢືນຈາກບໍລິສັດ ຫຼື ພາກສ່ວນທີ່ກ່ຽວຂ້ອງ;

1.6 ຕິດຕັ້ງລະບົບສັນຍານເຕືອນໄພ ແລະ ກຳນົດຈຸດລວມພົນກໍລະນີເກີດເຫດສຸກເສີນ (ສຳລັບໂຮງງານຂະໜາດກາງ ແລະ ໃຫຍ່);

1.7 ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ໃສ່ເຄື່ອງຈັກ ແລະ ອາຄານໂຮງງານ;

1.8 ວັດຖຸດິບ, ເຄມີ, ຜະລິດຕະພັນ ແລະ ສິ່ງຂອງທີ່ມີຄວາມສ່ຽງຕໍ່ການເກີດອັກຄີໄພ ຫຼື ເປັນອັນຕະລາຍໄດ້ງ່າຍ ໃຫ້ມີບ່ອນເກັບຮັກສາໄວ້ ຕາມມາດຕະຖານເຕັກນິກສະເພາະ;

1.9 ຕິດຕາມກວດກາສະພາບອາຄານໂຮງງານ ຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ໂຄງສ້າງອາຄານໂຮງງານມີຄວາມປອດໄພ.

2. ໂຮງງານແບບຄອບຄົວ ຕ້ອງມີມາດຕະຖານດ້ານຄວາມປອດໄພໂຮງງານ ແລະ ຜູ້ອອກແຮງງານ ດັ່ງນີ້:

2.1 ຕິດຕັ້ງບັ້ງດັບເພີງໃຫ້ເໝາະສົມ ແລະ ສາມາດນຳໃຊ້ໄດ້;

2.2 ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ທີ່ໄດ້ມາດຕະຖານ;

2.3 ຜູ້ອອກແຮງງານທຸກຄົນ ຕ້ອງໃສ່ອຸປະກອນປ້ອງກັນແຮງງານ ທີ່ຈຳເປັນຕາມແຕ່ລະວຽກ ເປັນຕົ້ນ ແວ່ນຕາ, ອຸປະກອນປິດປາກ-ປິດດັງ, ຖົງມື ແລະ ອື່ນໆ ເພື່ອປ້ອງກັນຝຸ່ນ, ກິ່ນ, ຄວັນ, ແສງ, ສຽງ, ຄວາມຮ້ອນ, ຄວາມເຢັນ ແລະ ອື່ນໆ.

**ມາດຕາ 39 ສຸຂານາໄມໂຮງງານ**

1. ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີມາດຕະຖານດ້ານສຸຂານາໄມໂຮງ ງານ ດັ່ງນີ້:

1.1 ມີຜູ້ຮັບຜິດຊອບວຽກງານສຸຂານາໄມໃນໂຮງງານໃຫ້ພຽງພໍ ເໝາະສົມກັບປະເພດ ແລະຂະໜາດ ໂຮງງານ;

1.2 ມີຕູ້ຢາ ແລະ ອຸປະກອນປະຖົມພະຍາບານເບື້ອງຕົ້ນຢູ່ໃນໂຮງງານ ເປັນຕົ້ນ ຢາແກ້ປວດ, ຢາຕ້ານເຊື້ອ, ຢາລ້າງບາດ, ຢາແດງ, ສຳລີ, ແພພັນບາດ, ບາຫຼອດວັດແທກອຸນຫະພູມ, ສາຍຢາງຮັດຫ້າມເລືອດ;

1.3 ມີຫ້ອງປະຖົມພະຍາບານເບື້ອງຕົ້ນ ແລະ ມີພະຍາບານປະຈຳໂຮງງານ ຢ່າງໜ້ອຍໜຶ່ງຄົນ ໂຮງງານຂະໜາດໃຫຍ່ ຫຼື ກິດຈະການທີ່ມີຄວາມສ່ຽງຄວາມເປັນອັນຕະລາຍຕໍ່ຮ່າງກາຍ ແລະ ສຸຂະພາບ;

1.4 ມີລະບົບນ້ຳປະປາ ຫຼື ນ້ຳບາດານໃຊ້ຢ່າງພຽງພໍ;

1.5 ມີນ້ຳດື່ມ ແລະ ຈອກນ້ຳດື່ມທີ່ສະອາດ, ພຽງພໍ ແລະ ເໝາະສົມກັບຈຳນວນຜູ້ອອກແຮງງານ ໃນອັດຕາສະເລ່ຍ 40 ຄົນຕໍ່ໜຶ່ງຈຸດນ້ຳດື່ມ, ໂຮງງານທີ່ຕິດຕັ້ງເຄື່ອງກັ່ນຕອງນ້ຳດື່ມ ຕ້ອງຮັບປະກັນຄຸນນະພາບ ໂດຍຜ່ານການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;

1.6 ມີຫ້ອງປ່ຽນເຄື່ອງນຸ່ງ, ຫ້ອງອາຫານ ແລະ ສະຖານທີ່ພັກຜ່ອນ ຕາມຄວາມເໝາະສົມ;

1.7 ມີບ່ອນລ້າງມື, ນ້ຳຢາຂ້າເຊື້ອ ຫຼື ສະບູ ທີ່ຖືກຫຼັກສຸຂານາໄມໃຫ້ພຽງພໍ ແລະ ເໝາະສົມກັບຈຳນວນຜູ້ອອກແຮງງານ, ສຳລັບໂຮງງານຜະລິດອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ ຕ້ອງມີບ່ອນລ້າງມື, ນ້ຳຢາຂ້າເຊື້ອ ຫຼື ສະບູ ໃນອັດຕາສະເລ່ຍຜູ້ອອກແຮງງານ 30 ຄົນ ຕໍ່ໜຶ່ງບ່ອນ;

1.8 ມີຫ້ອງນ້ຳ, ຫ້ອງປັດສະວະ ແລະ ມີເຈ້ຍອະນາໄມ ພຽງພໍກັບຈຳນວນຜູ້ອອກແຮງງານ ໂດຍແຍກຫ້ອງນ້ຳຍິງ ແລະ ຫ້ອງນ້ຳຊາຍສະເພາະ. ຄຸນລັກສະນະຂອງຫ້ອງນ້ຳ ແລະ ຫ້ອງປັດສະວະ ມີດັ່ງນີ້:

1) ຜູ້ອອກແຮງງານ ສະເລ່ຍບໍ່ເກີນ 30 ຄົນ ຕໍ່ໜຶ່ງໂຖສ້ວມ;

2) ອາຄານທີ່ມີຫຼາຍຊັ້ນ ຕ້ອງມີຫ້ອງນ້ຳ ແລະຫ້ອງປັດສະວະ ແຕ່ລະຊັ້ນຕາມຄວາມເໝາະສົມ;

3) ຫ້ອງນ້ຳຕ້ອງມີເນື້ອທີ່ບໍ່ຕ່ຳກວ່າ 1,5 ຕາແມັດ ຕໍ່ໜຶ່ງໂຖສ້ວມ;

4) ພື້ນຫ້ອງນ້ຳ, ຫ້ອງປັດສະວະ ຕ້ອງໃຊ້ວັດສະດຸ ທີ່ອະນາໄມໄດ້ງ່າຍ ແລະ ບໍ່ດູດນ້ຳ;

5) ມີເຈ້ຍອະນາໄມ ຫຼື ນ້ຳສຳລັບຊຳລະລ້າງໃຫ້ພຽງພໍ ຢູ່ພາຍໃນຫ້ອງສ້ວມ;

6) ມີລະບົບລະບາຍອາກາດຢ່າງພຽງພໍ ແລະ ທຳຄວາມສະອາດ ໃຫ້ຖືກຕາມຫຼັກສຸຂານາໄມ;

1.9 ອະນາໄມສະຖານທີ່ເຮັດວຽກ ແລະ ຂອບເຂດພາຍໃນໂຮງງານ ເປັນປະຈຳ;

1.10 ມີພາຊະນະ ຫຼື ຖົງ ໃສ່ຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອ ຕາມຄວາມເໝາະສົມ ໂດຍໃຫ້ແຍກປະເພດສິ່ງເສດເຫຼືອ ແລະ ມີວິທີການກໍາຈັດທີ່ດີ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ. ສິ່ງເສດເຫຼືອທີ່ເປັນອັນຕະລາຍ ຕ້ອງນໍາໄປບໍາບັດ ຫຼື ກໍາຈັດໃຫ້ຖືກຕ້ອງຕາມຫຼັກວິຊາການ. ບໍ່ໃຫ້ຖິ້ມ, ກໍາຈັດ, ຈູດ ຫຼື ທໍາລາຍສິ່ງເສດເຫຼືອຊະຊາຍຢູ່ໃນໂຮງງານ ແລະ ໃຫ້ປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ.

2. ໂຮງງານແບບຄອບຄົວ ຕ້ອງມີເງື່ອນໄຂດ້ານສຸຂານາໄມໂຮງງານ ດັ່ງນີ້:

2.1 ມີຕູ້ຢາປະຖົມພະຍາບານເບື້ອງຕົ້ນ ເປັນຕົ້ນ ຢາລ້າງບາດ, ຢາແດງ, ສໍາລີ, ແຜພັນບາດ ແລະ ອື່ນໆ;

2.2 ມີນໍ້າດື່ມ ແລະ ຈອກໃສ່ນໍ້າດື່ມ ທີ່ສະອາດ, ພຽງພໍ ແລະ ເໝາະສົມກັບຈໍານວນຜູ້ອອກແຮງງານ;

2.3 ມີຫ້ອງນໍ້າສະອາດ ພຽງພໍ ແລະ ເໝາະສົມກັບຈໍານວນຜູ້ແຮງງານ.

## ມາດຕາ 40 ສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມ

ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີມາດຕະຖານດ້ານສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມ ດັ່ງນີ້:

1. ລະດັບສຽງດັງ ທີ່ເກີດຈາກການແລ່ນເຄື່ອງຈັກຢູ່ໃນສະຖານທີ່ເຮັດວຽກ ໃຫ້ປະຕິບັດຕາມຄ່າມາດຕະຖານສາກົນທີ່ໄດ້ກໍານົດໄວ້ ໂດຍມີຫົວໜ່ວຍວັດແທກ ດີຊີເບວເອ (dB(A));
2. ແສງສະຫວ່າງຢູ່ໃນສະຖານທີ່ເຮັດວຽກພາຍໃນໂຮງງານ ຕ້ອງຮັບປະກັນ ດັ່ງນີ້:

2.1 ບໍ່ໃຫ້ມີແສງສະທ້ອນສ່ອງເຂົ້າຕາໂດຍກົງ ໃນເວລາເຮັດວຽກ;

2.2 ສາມາດເບິ່ງເຫັນສິ່ງກີດຂວາງຢູ່ບ່ອນທີ່ອາດກໍ່ໃຫ້ເກີດອັນຕະລາຍ ເປັນຕົ້ນ ອາຄານຜະລິດ, ເຄື່ອງຈັກ, ສາງ, ທາງຍ່າງ, ຂັ້ນໄດ, ປະຕູທາງເຂົ້າ-ອອກ ແລະ ປະຕູທາງອອກສຸກເສີນ;

2.3 ໃຫ້ມີແສງສະຫວ່າງພຽງພໍຢູ່ບ່ອນເຮັດວຽກ ຕາມແຕ່ລະປະເພດກິດຈະການ, ລະດັບຄວາມເຂັ້ມຂອງແສງສະຫວ່າງ ໃຫ້ປະຕິບັດຕາມຄ່າມາດຕະຖານສາກົນທີ່ໄດ້ກໍານົດໄວ້ ໂດຍມີຫົວໜ່ວຍວັດແທກ ລັກສ໌ (Lux);

3. ອຸນຫະພູມຢູ່ສະຖານທີ່ເຮັດວຽກພາຍໃນໂຮງງານ ໃຫ້ປະຕິບັດຕາມຄ່າມາດຕະຖານສາກົນທີ່ໄດ້ກໍານົດໄວ້ ໂດຍມີຫົວໜ່ວຍວັດແທກ ອົງສາເຊ (Ċ).

ຄ່າມາດຕະຖານສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມ ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະຖານສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມ ສໍາລັບໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ.

## ມາດຕາ 41 ສິ່ງແວດລ້ອມໂຮງງານ

1. ໂຮງງານຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫຍ່ ຕ້ອງມີມາດຕະຖານເຕັກນິກ ດ້ານສິ່ງແວດລ້ອມໂຮງງານ ດັ່ງນີ້:

1.1 ມີໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈໍາໂຮງງານ ເພື່ອຮັບຜິດຊອບຕິດຕາມກວດກາມົນລະພິດ ກໍລະນີເປັນໂຮງງານທີ່ມີຄວາມສ່ຽງຜົນກະທົບດ້ານສິ່ງແວດລ້ອມ ລະດັບປານກາງ ແລະ ລະດັບສູງ;

1.2 ມີລະບົບບໍາບັດ ຫຼື ກໍາຈັດສິ່ງເສດເຫຼືອທີ່ໄດ້ມາດຕະຖານ, ມົນລະພິດ ແລະ ສິ່ງເສດເຫຼືອ ທີ່ຈະປ່ອຍອອກຈາກໂຮງງານ ຕ້ອງຢູ່ໃນເກນຄ່າມາດຕະຖານຕາມທີ່ກໍານົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

1.3 ມີໃບຢັ້ງຢືນດ້ານເຕັກນິກກ່ຽວກັບລະບົບບໍາບັດສິ່ງເສດເຫຼືອ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ.

2. ໂຮງງານແບບຄອບຄົວ ຫາກມີມົນລະພິດ ແລະ ສິ່ງເສດເຫຼືອຈາກການຜະລິດ ໃຫ້ປະຕິບັດມາດຕະຖານດ້ານສິ່ງແວດລ້ອມໂຮງງານ ຕາມຂໍ້ 1.2 ຂອງມາດຕານີ້.

**ມາດຕາ 42 ການບໍລິຫານໂຮງງານ**

ໂຮງງານຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຄວນມີແຜນການບໍລິຫານໂຮງງານ, ກົດລະບຽບຄຸ້ມຄອງໂຮງງານ, ການຄຸ້ມຄອງການຜະລິດ ແລະ ປະຕິບັດໃຫ້ໄດ້ມາດຕະຖານໃດໜຶ່ງ ເປັນຕົ້ນ ລະບົບ 5 ສ (5S), ມາດຕະຖານການຜະລິດທີ່ດີ (GMP) ຫຼື ມາດຕະຖານສາກົນ (ISO) ໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ແລະສ້າງແຜນການປ້ອງກັນທີ່ເປັນລະບົບມາດຕະຖານການດຳເນີນງານ (SOP) ເພື່ອສະກັດກັ້ນການລະບາດຂອງພະຍາດຕ່າງໆ ຢູ່ໃນໂຮງງານຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ IV
# ການຄຸ້ມຄອງ ແລະ ການປ່ຽນແປງ ການດຳເນີນກິດຈະການໂຮງງານ
## ໝວດທີ 1
## ການຄຸ້ມຄອງການດຳເນີນກິດຈະການໂຮງງານ

**ມາດຕາ 43 ການຄຸ້ມຄອງການດຳເນີນກິດຈະການໂຮງງານ**

ການຄຸ້ມຄອງການດຳເນີນກິດຈະການໂຮງງານ ປະກອບມີດັ່ງນີ້:

1. ການສ້າງແຜນການຜະລິດປະຈຳປີຂອງໂຮງງານ;
2. ການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່;
3. ການນຳເຂົ້າວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ;
4. ການຮັບປະກັນຄຸນນະພາບຜະລິດຕະພັນ;
5. ການແກ້ໄຂການເກີດອຸປະຕິເຫດຢູ່ໃນໂຮງງານ;
6. ການຄຸ້ມຄອງການນຳໃຊ້ເຄມີ, ການປ່ອຍມົນລະພິດ ແລະ ນ້ຳເສຍຄຸນ ອອກຈາກໂຮງງານ.

**ມາດຕາ 44 ການສ້າງແຜນການຜະລິດປະຈຳປີຂອງໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສ້າງແຜນການເຄື່ອນໄຫວປະຈຳປີ ຕາມແບບພິມ ອ ເຊັ່ນ: ອ1 ແຜນການຜະລິດ, ອ2 ແຜນການຈຳໜ່າຍ, ອ3 ແຜນຄວາມຕ້ອງການວັດຖຸດິບ, ອຸປະກອນ, ອາໄຫຼ່, ຊິ້ນສ່ວນ ແລະ ເຄື່ອງຈັກ ປະຈຳປີ, ອ4 ໃບຄິດໄລ່ລາຄາສຳເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ, ອ5 ໃບຢັ້ງຢືນຜະລິດຕະພັນຂອງໂຮງງານ, ອ6 ສະຫຼຸບການນຳເຂົ້າວັດຖຸດິບ, ອຸປະກອນ, ອາໄຫຼ່, ຊິ້ນສ່ວນ, ເຄື່ອງຈັກອຸດສາຫະກຳ ແລະ ອ7 ກຳນົດໝາຍເສດຖະກິດເຕັກນິກການສິ້ນເປືອງ ແລ້ວນຳສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຮັບຮອງຕາມການແບ່ງຂັ້ນຄຸ້ມຄອງ.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະຫຼຸບລາຍງານແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ປີລະຄັ້ງ ຕາມປີປະຕິທິນ ແລ້ວສົ່ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຊາບ ແລະ ເພື່ອເປັນຂໍ້ມູນພິຈາລະນາແຜນການເຄື່ອນໄຫວຂອງປີຕໍ່ໄປ.

**ມາດຕາ 45 ການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່**

ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງວັດຖຸປະກອນກໍ່ສ້າງໂຮງງານທີ່ນຳເຂົ້າ ຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ດີ, ຖືກກັບເປົ້າໝາຍຂອງການດຳເນີນກິດຈະການ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີຂອງໂຮງງານ.

ການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງວັດຖຸປະກອນກໍ່ສ້າງໂຮງງານ ເພື່ອມານຳໃຊ້ຢູ່ໃນໂຮງງານ ຕ້ອງຂໍຢັ້ງຢືນການນຳເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ. ຂັ້ນຕອນການນຳເຂົ້າໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ**

ວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບທີ່ນຳເຂົ້າ ຕ້ອງໄດ້ມາດຕະຖານ ແລະ ມີຄຸນນະພາບດີ, ຖືກຕ້ອງຕາມເປົ້າໝາຍຂອງການຜະລິດ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີຂອງໂຮງງານ.

ການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ ເພື່ອການຜະລິດຢູ່ໃນໂຮງງານ ຕ້ອງຂໍຢັ້ງຢືນການນຳເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ. ຂັ້ນຕອນການນຳເຂົ້າໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການນຳເຂົ້າເຄມີ, ສິ່ງເສດເຫຼືອເຄມີອັນຕະລາຍ ແລະ ສິ່ງເສດເຫຼືອອັນຕະລາຍອື່ນ ເພື່ອຮັບໃຊ້ໃນຂະບວນການຜະລິດ ຫຼື ປຸງແຕ່ງ ຕ້ອງປະຕິບັດຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 47 ການຮັບປະກັນຄຸນນະພາບຜະລິດຕະພັນ**

ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດຂອງໂຮງງານ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ ແລະ ໄດ້ມາດຕະຖານ, ມີສຸຂານາໄມທີ່ດີ ແລະ ມີຄວາມປອດໄພຕໍ່ຜູ້ຊົມໃຊ້ ຫຼື ຜູ້ບໍລິໂພກ ໂດຍຖືກຕ້ອງຕາມລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານໃດໜຶ່ງ ທີ່ຕະຫຼາດຕ້ອງການ.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງຕິດ ສະຫຼາກ, ເຄື່ອງໝາຍການຄ້າ ແລະ ບາໂຄດ ໃສ່ຜະລິດຕະພັນຂອງໂຮງງານ ແລະ ສາມາດສະເໜີຂໍຢັ້ງຢືນຜະລິດຕະພັນ, ກາໝາຍຜະລິດຕະພັນ ຫຼື ຢັ້ງຢືນມາດຕະຖານຜະລິດຕະພັນຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ.

ສຳລັບຜະລິດຕະພັນອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ ຕ້ອງລະບຸວັນເດືອນປີຜະລິດ ແລະ ວັນເດືອນປີໝົດອາຍຸ. ໃນນັ້ນ, ກ່ອນຈຳໜ່າຍຜະລິດຕະພັນ ໂຮງງານຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 48 ການແກ້ໄຂການເກີດອຸປະຕິເຫດຢູ່ໃນໂຮງງານ**

ກໍລະນີມີອຸປະຕິເຫດເກີດຢູ່ໂຮງງານ ເຮັດໃຫ້ລະບົບການຜະລິດເສຍຫາຍ ແລະ ເປ່ເພ, ຄົນບາດເຈັບ ຫຼື ເສັຍຊີວິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງລາຍງານຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບໂດຍທັນທີ ແລະ ຕ້ອງແກ້ໄຂຕາມແຕ່ລະກໍລະນີ ດັ່ງນີ້:

1. ກໍລະນີເກີດອຸປະຕິເຫດ ເຮັດໃຫ້ຄົນເສຍຊີວິດ ຫຼື ບາດເຈັບຮ້າຍແຮງ ໃຫ້ຢຸດເຄື່ອງຈັກຢູ່ຂອດການຜະລິດທັນທີ ຈົນກວ່າຈະມີການສືບສວນສອບສວນຫາສາເຫດຂອງການເກີດອຸປະຕິເຫດ. ຜູ້ດຳເນີນກິດຈະການໂຮງງານ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ເກີດຂຶ້ນ ລວມທັງຮັບຜິດຊອບຕໍ່ຜູ້ບາດເຈັບ ແລະ ຜູ້ເສຍຊີວິດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ກໍລະນີເກີດອຸປະຕິເຫດ ເຮັດໃຫ້ໂຮງງານຢຸດເຊົາເກີນ ເຈັດວັນ ຂຶ້ນໄປ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບພາຍໃນ 15 ວັນລັດຖະການ ນັບແຕ່ມື້ໂຮງງານໄດ້ຢຸດເຊົາ. ພາຍຫຼັງປັບປຸງແກ້ໄຂອຸປະຕິເຫດທີ່ເກີດຂຶ້ນ ແລະ ສາມາດດຳເນີນການຜະລິດໄດ້ ຕ້ອງລາຍງານໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ລົງກວດກາ ແລະ ຢັ້ງຢືນທາງດ້ານເຕັກນິກກ່ອນ ຈຶ່ງສາມາດດຳເນີນການຜະລິດຄືນໃໝ່ໄດ້.

## ໝວດທີ 2
## ການປ່ຽນແປງການດຳເນີນກິດຈະການໂຮງງານ

**ມາດຕາ 49 ການປ່ຽນແປງການດຳເນີນກິດຈະການໂຮງງານ**

ການປ່ຽນແປງການດຳເນີນກິດຈະການໂຮງງານ ປະກອບມີດັ່ງນີ້:

1. ການຂະຫຍາຍໂຮງງານ;
2. ການຍົກຍ້າຍໂຮງງານ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ;
5. ການສືບທອດການດຳເນີນກິດຈະການໂຮງງານ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 50 ການຂະຫຍາຍໂຮງງານ**

ການຂະຫຍາຍໂຮງງານ ມີ ສາມ ຮູບການ ຄື:

1. ການເພີ່ມເຄື່ອງຈັກ;
2. ການເພີ່ມເນື້ອທີ່ອາຄານຜະລິດ;
3. ການເພີ່ມທັງສອງຢ່າງພ້ອມກັນ.

ການເພີ່ມອາຄານອື່ນທີ່ບໍ່ແມ່ນອາຄານຜະລິດ, ສາງວັດຖຸດິບ ແລະ ສາງຜະລິດຕະພັນ ບໍ່ຖືວ່າເປັນການຂະຫຍາຍໂຮງງານ ແລະ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ.

ຜູ້ດຳເນີນກິດຈະການໂຮງງານ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້, ສຳລັບກິດຈະການທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ກ່ອນຈະຂະຫຍາຍໂຮງງານຕ້ອງປະກອບຄຳຮ້ອງຂໍຂະຫຍາຍໂຮງງານຕາມແບບພິມ ຮງ 1 ພ້ອມຄັດແກ້ເອກະສານທາງດ້ານເຕັກນິກທີ່ກ່ຽວຂ້ອງ ໃນສ່ວນທີ່ມີການເພີ່ມ ຫຼື ປ່ຽນແປງຈາກການດຳເນີນກິດຈະການຜ່ານມາ ເປັນຕົ້ນ ບົດວິພາກເສດຖະກິດ-ເຕັກນິກໂຮງງານ, ບັນຊີເຄື່ອງຈັກ ແລະ ແຜນຜັງເຕັກນິກໂຮງງານໃນສ່ວນທີ່ເພີ່ມໃໝ່ ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາ ລົງກວດກາພື້ນທີ່ໂຮງງານທີ່ຈະຂະຫຍາຍ ພ້ອມເຮັດບົດບັນທຶກການກວດກາ ແລະ ແຈ້ງຕອບໃຫ້ຜູ້ດຳເນີນກິດຈະການໂຮງງານຊາບ. ພາຍຫຼັງໄດ້ຮັບແຈ້ງຕອບເຫັນດີ ຜູ້ດຳເນີນກິດຈະການໂຮງງານສາມາດດຳເນີນການຂະຫຍາຍໂຮງງານໄດ້.

**ມາດຕາ 51 ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ**

ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ ມີ ສອງ ກໍລະນີ ດັ່ງນີ້:

1. ໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກລວມທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງລວມຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບສ່ວນຮ້ອຍ ຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍໂຮງງານ;

2. ໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງລວມຂອງເຄື່ອງຈັກ ຕັ້ງແຕ່ 50 ແຮງມ້າຂຶ້ນໄປ ໃຫ້ຖືວ່າເປັນການຂະຫຍາຍໂຮງງານ.

**ມາດຕາ 52 ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານຜະລິດ**

ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານຜະລິດ ຫຼື ກໍ່ສ້າງອາຄານຜະລິດເພີ່ມໃໝ່ ຢູ່ໃນຂອບເຂດພື້ນທີ່ດຽວກັນ ມີ ສອງ ກໍລະນີ ດັ່ງນີ້:

1. ອາຄານຜະລິດຂອງໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ 200 ຕາແມັດ, ຖ້າເພີ່ມເນື້ອທີ່ອາຄານຜະລິດ ຕັ້ງແຕ່ ຫ້າສິບສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍໂຮງງານ;

2. ອາຄານຜະລິດຂອງໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນ 200 ຕາແມັດ, ຖ້າເພີ່ມເນື້ອທີ່ອາຄານຜະລິດ ຕັ້ງແຕ່ 100 ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍໂຮງງານ.

### ມາດຕາ 53 ການດຳເນີນກິດຈະການໃນສ່ວນຂະຫຍາຍໂຮງງານ

ພາຍຫຼັງສຳເລັດການຂະຫຍາຍໂຮງງານໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຜູ້ດຳເນີນກິດຈະການໂຮງງານ ຕ້ອງປະກອບໃບຄຳຮ້ອງຂໍດຳເນີນກິດຈະການສ່ວນຂະຫຍາຍໂຮງງານ ຕາມແບບພິມ ຮງ 2 ເພື່ອປັບປຸງເນື້ອໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໃຫ້ສອດຄ່ອງກັບການຂະຫຍາຍໂຮງງານ. ຂັ້ນຕອນການພິຈາລະນາໃຫ້ປະຕິບັດ ດັ່ງນີ້:

1. ຂັ້ນຕອນການພິຈາລະນາການດຳເນີນກິດຈະການໃນສ່ວນຂະຫຍາຍໂຮງງານ ໃຫ້ປະຕິບັດຄືກັນກັບຂັ້ນຕອນການສະເໜີຂໍດຳເນີນກິດຈະການໂຮງງານ ຕາມມາດຕາ 20, 21 ແລະ 22 ຂອງຂໍ້ຕົກລົງສະບັບນີ້. ອາຍຸໃບຢັ້ງຢືນດຳເນີນກິດຈະການສ່ວນຂະຫຍາຍ ໃຫ້ກຳນົດເອົາຕາມອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ;

2. ການຂະຫຍາຍໂຮງງານ ຖ້າມີການເພີ່ມ ຫຼື ຫຼຸດທຶນ, ເພີ່ມ ຫຼື ຫຼຸດກິດຈະການຜະລິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະເໜີປັບປຸງເນື້ອໃນໃບອະນຸຍາດລົງທຶນ ຫຼື ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດສ້າງຕັ້ງໂຮງງານ ແລ້ວສະເໜີປັບປຸງເນື້ອໃນໃບຢັ້ງຢືນດຳເນີນກິດຈະການໂຮງງານ;

3. ກໍລະນີເພີ່ມເຄື່ອງຈັກ ຫຼື ເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານ ແຕ່ບໍ່ເຖິງຂັ້ນຂະຫຍາຍ ຜູ້ດຳເນີນກິດຈະການໂຮງງານ ຕ້ອງລາຍງານຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຊາບ.

### ມາດຕາ 54 ການຍົກຍ້າຍໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍໂຮງງານໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງປະກອບເອກະສານຄືກັນກັບການຂໍສ້າງຕັ້ງໂຮງງານໃໝ່ ຕາມທີ່ກຳນົດໄວ້ໃນມາດຕາ 10, 11 ແລະ 12 ຂອງຂໍ້ຕົກລົງສະບັບນີ້. ທີ່ຕັ້ງໂຮງງານບ່ອນໃໝ່ຕ້ອງປະຕິບັດຕາມເງື່ອນໄຂດ້ານທີ່ຕັ້ງໂຮງງານ ຕາມມາດຕາ 32 ແລະ ຂໍດຳເນີນກິດຈະການໂຮງງານຕາມທີ່ກຳນົດໄວ້ໃນມາດຕາ 20, 21 ແລະ 22 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານ ຕ້ອງສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຂໍຢຸດເຊົາຖາວອນໂຮງງານຫຼັງເດີມ ຕາມມາດຕາ 26 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 55 ການຍົກຍ້າຍເຄື່ອງຈັກ

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ 2 ຮູບການ ຄື: ການຍົກຍ້າຍເຄື່ອງຈັກຊົ່ວຄາວ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກຊົ່ວຄາວຢູ່ພາຍໃນໂຮງງານໄປຍັງສະຖານທີ່ອື່ນ ໃຫ້ຍື່ນໃບສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ພ້ອມລະບຸເຫດຜົນຂອງການຍົກຍ້າຍ ຕາມແບບພິມ ຮງ 6 ພ້ອມຄັດຕິດບັນຊີເຄື່ອງຈັກ ແລະ ເອກະສານທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ. ໃນນັ້ນ, ໃຫ້ລະບຸເງື່ອນໄຂ ແລະ ວິທີການຂົນສົ່ງເພື່ອຮັບປະກັນຄວາມປອດໄພ. ການຍົກຍ້າຍເຄື່ອງຈັກຊົ່ວຄາວຕ້ອງເອົາກັບຄືນ ພາຍໃນໜຶ່ງປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດ. ກໍລະນີຈຳເປັນຕ້ອງການນຳໃຊ້ເກີນກວ່າໜຶ່ງປີ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຂໍຕໍ່ເວລາໄດ້ອີກສູງສຸດ ບໍ່ເກີນໜຶ່ງປີ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຊາບ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດບັນຊີ

ເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ ແລະ ຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ 15 ວັນລັດຖະການ.

**ມາດຕາ 56 ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ**

ໃນກໍລະນີມີການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຜູ້ດຳເນີນກິດຈະການໂຮງງານຜູ້ເກົ່າ ຕ້ອງລາຍງານໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຊາບພາຍໃນ 15 ວັນລັດຖະການ ນັບແຕ່ມື້ໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ ເປັນຕົ້ນໄປ.

ຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການໂຮງງານ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດສ້າງຕັ້ງໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການໂຮງງານ ຈາກເຈົ້າຂອງເດີມ ມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການ ພາຍໃນ 30 ວັນລັດຖະການ ນັບແຕ່ມື້ໄດ້ເຊັນສັນຍາໂອນ, ເຊົ່າ ຫຼື ຊື້ກິດຈະການດັ່ງກ່າວ.

**ມາດຕາ 57 ການສືບທອດການດຳເນີນກິດຈະການໂຮງງານ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຊາບພາຍໃນ 60 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດສ້າງຕັ້ງໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງຜູ້ດຳເນີນກິດຈະການໂຮງງານໄດ້ເສຍຊີວິດເກີນ 90 ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບອະນຸຍາດສ້າງຕັ້ງໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານນັ້ນ ໄດ້ໝົດອາຍຸລົງພ້ອມກັບການເສຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານ. ຖ້າຫາກຜູ້ສືບທອດຈະດຳເນີນກິດຈະການໂຮງງານຄືນໃໝ່ ພາຍຫຼັງໝົດກຳນົດເວລາທີ່ລະບຸໄວ້ ໃຫ້ປະຕິບັດຕາມຂັ້ນຕອນ ຄືກັນກັບການຂໍດຳເນີນກິດຈະການໂຮງງານໃໝ່.

**ມາດຕາ 58 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ອຳນວຍການໂຮງງານ**

ການປ່ຽນຊື່ໂຮງງານ ແລະ ປ່ຽນຜູ້ອຳນວຍການໂຮງງານສາມາດປ່ຽນໄດ້ ແຕ່ຕ້ອງສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອດັດແກ້ໃບຢັ້ງຢືນດຳເນີນກິດຈະການໂຮງງານ. ໃນກໍລະນີປ່ຽນຜູ້ອຳນວຍການໂຮງງານ ຕ້ອງມີໜັງສືແຕ່ງຕັ້ງຈາກຜູ້ອຳນວຍການບໍລິສັດ.

## ພາກທີ V
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ

**ມາດຕາ 59 ສິດຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ມີສິດດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການດຳເນີນກິດຈະການໂຮງງານ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການໂຮງງານ;
3. ດຳເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດໃນໃບຢັ້ງຢືນດຳເນີນກິດຈະການໂຮງງານ;

4. ໄດ້ຮັບນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນກິດຈະການໂຮງງານ;

5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້-ຂາຍ, ຂະຫຍາຍ, ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ຢຸດເຊົາກິດຈະການໂຮງງານ;

6. ຊື້-ຂາຍ ເຄື່ອງຈັກ ແລະ ອຸປະກອນ ຂອງໂຮງງານ;

7. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 60 ພັນທະຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ມີພັນທະ ດັ່ງນີ້:

1. ສ້າງຕັ້ງໂຮງງານ ແລະ ດຳເນີນກິດຈະການໂຮງງານ ຕາມມາດຕະຖານເຕັກນິກໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ;

2. ເສຍພາສີ, ອາກອນ, ພັນທະ ແລະ ຄ່າທຳນຽມອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;

3. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບແຮງງານ, ຄ່າແຮງງານ, ສະຫວັດດີການ, ອຸປະກອນປ້ອງກັນຄວາມປອດໄພຂອງຜູ້ອອກແຮງງານ ແລະ ອື່ນໆ;

4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ອຸປະຕິເຫດປະຈຳໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ລາຍງານການເກີດອຸປະຕິເຫດຂັ້ນຮ້າຍແຮງຢູ່ພາຍໃນໂຮງງານ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ;

6. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ການຮັກສາສິ່ງແວດລ້ອມ;

7. ລາຍງານຂໍ້ມູນການຜະລິດ, ການຈຳໜ່າຍ ແລະ ຂໍ້ມູນການເຄື່ອນໄຫວຂອງໂຮງງານ ປະຈຳຫົກເດືອນ ແລະ ປະຈຳປີ ສຳລັບໂຮງງານທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ແລະ ລາຍງານປະຈຳປີ ສຳລັບໂຮງງານທີ່ບໍ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

8. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຖ້າມີການຢຸດເຊົາ;

9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 61 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ເກີນຂອບເຂດສິດ ແລະ ໜ້າທີ່ ຕໍ່ກັບວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ;

3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານດຳເນີນກິດຈະການ ທີ່ບໍ່ມີໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຫຼື ບໍ່ລາຍງານ ກ່ຽວກັບການດຳເນີນກິດຈະການໂຮງງານ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ມາດຕາ 62 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການໂຮງງານ

ຫ້າມຜູ້ດຳເນີນກິດຈະການໂຮງງານ ມີພຶດຕິກຳ ດັ່ງນີ້:

1. ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຕັ້ງໂຮງງານບໍ່ຖືກຕາມສະຖານທີ່ກຳນົດ ຫຼື ຕັ້ງຢູ່ໃນເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສ້າງຕັ້ງໂຮງງານແບບຄອບຄົວ ໂດຍບໍ່ມີໃບທະບຽນວິສາຫະກິດ;

4. ດຳເນີນກິດຈະການໂຮງງານແບບຄອບຄົວ ໂດຍບໍ່ແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບ;

5. ຕິດຕັ້ງເຄື່ອງຈັກເກີນຂະໜາດໂຮງງານ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;

6. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

7. ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ;

9. ນຳວັດຖຸດິບ, ເຄື່ອງຈັກ, ອຸປະກອນ ຫຼື ແຮງງານຕ່າງປະເທດ ເຂົ້າມາໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

10. ນຳເຂົ້າ ຫຼື ນຳໃຊ້ ເຄມີອັນຕະລາຍ ຢູ່ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

11. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ໃຫ້ຢຸດເຊົາການດຳເນີນກິດຈະການໂຮງງານ;

12. ກໍ່ສ້າງ, ດັດແກ້ ຫຼື ຕິດຕັ້ງເຄື່ອງຈັກ ລະບົບບຳບັດສິ່ງເສດເຫຼືອ ກ່ອນໄດ້ຮັບໃບຢັ້ງຢືນດ້ານເຕັກນິກກ່ຽວກັບລະບົບບຳບັດສິ່ງເສດເຫຼືອ;

13. ປ່ອຍມົນລະພິດ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມກົດໝາຍ ແລະ ລະບຽບການ;

14. ບໍ່ປະຕິບັດຕາມມາດຕະຖານເຕັກນິກໂຮງງານ;

15. ໃຫ້ສິນບົນ ແກ່ເຈົ້າໜ້າທີ່-ພະນັກງານ;

16. ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ພາຍຫຼັງໝົດອາຍຸ;

17. ນຳໃຊ້ໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ໝົດອາຍຸ;

18. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 63 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ຜູ້ທີ່ກ່ຽວຂ້ອງ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງຜູ້ດຳເນີນກິດຈະການໂຮງງານ;

4. ເປີດເຜີຍເອກະສານທາງລັດຖະການ, ຂໍ້ມູນ ແລະ ຄວາມລັບທາງດ້ານທຸລະກິດ ຂອງຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາໂຮງງານ

### ມາດຕາ 64 ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ກວດກາໂຮງງານ

ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ກວດກາໂຮງງານ ປະກອບມີ ສາມ ຂັ້ນດັ່ງນີ້:

1. ຂັ້ນກະຊວງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

### ມາດຕາ 65 ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາໂຮງງານ

ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາໂຮງງານ ຕາມທີ່ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການແບ່ງຂັ້ນຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

### ມາດຕາ 66 ເນື້ອໃນການກວດກາໂຮງງານ

ການກວດກາໂຮງງານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ມາດຕະຖານເຕັກນິກໂຮງງານ ເປັນຕົ້ນ ທີ່ຕັ້ງໂຮງງານ, ອາຄານໂຮງງານ, ເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ລະບົບການກຳຈັດ ແລະ ການບຳບັດສິ່ງເສດເຫຼືອໂຮງງານ;

2. ສະພາບການເຄື່ອນໄຫວຂອງໂຮງງານ ເປັນຕົ້ນ ການນຳເຂົ້າວັດຖຸດິບ, ເຄື່ອງຈັກ ແລະ ອຸປະກອນການຜະລິດ, ຜະລິດຕະພັນ ແລະ ແຮງງານ;

3. ການນຳໃຊ້ສິດ ແລະ ປະຕິບັດພັນທະຂອງຜູ້ດຳເນີນກິດຈະການໂຮງງານ.

### ມາດຕາ 67 ຮູບການກວດກາໂຮງງານ

ການກວດກາໂຮງງານ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ. ກ່ອນລົງກວດກາຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານຊາບກ່ອນ ຢ່າງໜ້ອຍ ໜຶ່ງວັນ. ການລົງກວດກາຕ້ອງເຮັດບົດບັນທຶກກວດກາ ຕາມແບບພິມ ຮງ 11 ແລະ ຮງ 12;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ແມ່ນການກວດການອກແຜນ ທີ່ເຫັນວ່າມີຄວາມຈຳເປັນ ຫຼື ຕາມຄຳສັ່ງ ທີ່ຕ້ອງໄດ້ລົງກວດກາ ເປັນຕົ້ນ ການສ້າງຕັ້ງ, ການຂະຫຍາຍ ຫຼື ການດຳເນີນກິດຈະການໂຮງງານໂດຍທີ່ບໍ່ໄດ້ຮັບອະນຸຍາດ. ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານຊາບກ່ອນລ່ວງໜ້າ ແລະ ຕ້ອງເຮັດບົດບັນທຶກກວດກາ ຕາມແບບພິມ ຮງ 14;

3. ການກວດກາ ແບບກະທັນຫັນ ແມ່ນການກວດກາ ແບບຈໍາເປັນ ແລະ ຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ຜູ້ດໍາເນີນກິດຈະການໂຮງງານຊາບ ເປັນຕົ້ນ ມີຄໍາສັ່ງຊີ້ນໍາຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສິ່ງໄສວ່າອາດກໍ່ໃຫ້ເກີດບັນຫາທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການເຄື່ອນໄຫວຂອງໂຮງງານບໍ່ຖືກຕາມເປົ້າໝາຍຂອງການອະນຸຍາດ, ການເຄື່ອນໄຫວຜິດຕໍ່ກົດໝາຍ ແລະ ລະບຽບການ, ເກີດອຸປະຕິເຫດແຮງງານ, ເກີດອັກຄີໄພ ມີຜົນເສຍຫາຍຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ. ການກວດກາແບບກະທັນຫັນນີ້ ແມ່ນລົງກວດກາໄດ້ທຸກເວລາ ແລະ ຕ້ອງເຮັດບົດບັນທຶກກວດກາ ຕາມແບບພິມ ຮງ 15.

ການກວດກາໂຮງງານຂອງເຈົ້າໜ້າທີ່ກວດກາໂຮງງານ ໃຫ້ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ຮັບຜິດຊອບໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 69 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 70 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ສະບັບເລກທີ 0264/ອຄ.ກອຫ, ລົງວັນທີ 15 ມີນາ 2019 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານຂະໜາດນ້ອຍແບບຄອບຄົວ ສະບັບເລກທີ 0878/ອຄ, ລົງວັນທີ 11 ພຶດສະພາ 2011.

ລັດຖະມົນຕີ

ມະໄລທອງ ກົມມະສິດ